DOCUMENT RESUME

ED 356 676 FL 800 510

AUTHOR	Pecoraro, Diane; Phommasouvanh, Bounlieng
TITLE	Limited English Proficient (LEP) Parent Involvement Project. Overview [and] User's Guide. Lao.
INSTITUTION	Minnesota State Dept. of Education, St. Paul. Office of Community and Adult Basic Education.
PUB DATE	91
NOTE	44p.; For English version, see ED 344 499; for the Cambodian, Hmong, Vietnamese, and Spanish versions, see FL 800 508-512.
PUB TYPE	Reports - Descriptive (141) -- Guides - Non-Classroom Use (055)
LANGUAGE	Lao
EDRS PRICE	MF01/PC02 Plus Postage.
DESCRIPTORS	*Acculturation; Adult Education; Class Activities; Elementary Secondary Education; English (Second Language); *Immigrants; Instructional Materials; *Laotians; Lesson Plans; *Limited English Speaking; Parent Participation; *Parents as Teachers; *Parent School Relationship; Refugees; Values
IDENTIFIERS	*Minnesota

ABSTRACT

The Limited English Proficient (LEP) Parent Involvement Project, a collaborative project between two state agencies, aims to help refugee and immigrant parents to be effective in their new American culture. Materials are provided that were developed for use in various adult education settings such as English-as-a-Second-Language (ESL) classes, community-based organizations, and parent groups for the purposes of helping LEP parents and caretakers see themselves as active participants in their children's learning. The following goals guided the development of the materials: (1) build on what people already know from their experience as parents in their own countries; (2) help parents restore their visions of themselves as the first and primary teachers of their children; (3) create opportunities for parents to build bridges between experiences in their new and native countries; and (4) encourage parents to define and keep values and traditions that are meaningful parts of their cultures. This document includes the following four instructional modules: Building the New and Old Cultures; Schools are Part of the Culture; Parents are Teachers; and Discipline (who teaches children, problems and punishment, communication, praising and rewarding, and types of resources). The accompanying user's guide for the teacher or community worker includes an introduction to the modules, suggestions for getting started and lesson planning, and suggested activities. Contains 7 references. (Adjunct ERIC Clearinghouse on Literacy Education) (KM)

****
* Reproductions supplied by EDRS are the best that can be made *
* from the original document. *
****

ED356676

Limited English Proficient (LEP) Parent Involvement Project

U.S. DEPARTMENT OF EDUCATION
Office of Educational Research and Improvement
EDUCATIONAL RESOURCES INFORMATION CENTER (ERIC)

- [x] This document has been reproduced as received from the person or organization originating it
- [ ] Minor changes have been made to improve reproduction quality

• Points of view or opinions stated in this document do not necessarily represent official OERI position or policy

"PERMISSION TO REPRODUCE THIS MATERIAL HAS BEEN GRANTED BY
Pecoraro, D.

TO THE EDUCATIONAL RESOURCES INFORMATION CENTER (ERIC)."

Lao, 1991

FL800510

BEST COPY AVAILABLE

Limited English Proficient (LEP)

Parent Involvement Project

ໂຄງການພົວພັນພໍ່ແມ່ນັກຮຽນທີ່ຂາດພື້ນຖານພາສາອັງກິດ

1

ກົມສຶກສາປະຈຳຣັຖມິນນິໂຊຕາ
ພະແນກປະຊາສຶກສາແລະສຶກສາຜູ້ໃຫຍ່
ໜ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາອັງກິດ

Minnesota Department of Education
Community and Adult Education Section
Limited English Proficiency Education Unit

ຣະດູໃບໄມ້ປົ່ງ ໑໙໙໑ Spring, 1991

MODULE 1

BRIDGING THE NEW AND OLD CULTURES

ບົດຮຽນ ທີ່ 1

ການສ້າງສະພານເຊື່ອມວັທະນະທັມ ໃໝ່ ແລະ ເກົ່າ

ຄຳຂອບໃຈ

ປະມວນບົດຮຽນເຫລົ່ານີ້ ເປັນຜົນງານຮ່ວມມືຂອງ ຍານາງ ໄດແອນ ປີກາເຣໂຣ ຜແນກປະຊາສຶກສາ ແລະ ສຶກສາຜູ້ໃຫຍ່ ແລະ ທ່ານ ດຣ. ບຸນລັງ ພິມມະສຸວັນ ຫນ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາອັງກິດ.

ຍານາງ ຈຸດິດ ສະໂຕ ອະດີດຄູສອນພາສາອັງກິດເປັນພາສາທີສອງ ຊຶ່ງປັດຈຸບັນນີ້ທຳຫນ້າທີ່ເປັນຄູສອນຢູ່ໂຮງຮຽນມັທຍົມພາກຕົ້ນແຊນຟອດ ໃນເມືອງມິນນີອາໂປລິສ ຊ່ວຍອອກແບບແລະຂຽນປື້ມອຸປກອນການສອນດັ່ງກ່າວ.

ລະດູໃບໄມ້ປົ່ງ 1990

ທ່ານ ທີ່ຮັກແພງ,

ໄດ້ມີຂະບວນການຂັ້ນຊາດ ທີ່ສົ່ງເສີມໃຫ້ບັນດາພໍ່ແມ່ ມີສິ່ງກ່ຽວພົວພັນໃນການສຶກສາຂອງພວກລູກໆ. ພວກເຮົາສນັບສນູນໃນແນວຄິດດັ່ງກ່າວ ໂດຍສະເພາະແລ້ວສຳລັບຄອບຄົວ ຊຶ່ງເປັນຊາວອົພຍົບລີ້ໄພ ຫລືຊາວອົພຍົບທົ່ວໄປ ທີ່ໄດ້ເຂົ້າມາອາໄສຢູ່ສະຫະຣັດອະເມຣິກາ ໃນໄລຍະ 20 ປີ ທີ່ຜ່ານມານີ້ ແລະຂາດພື້ນຖານດ້ານພາສາອັງກິດ. ຊາວອົພຍົບດັ່ງກ່າວ ຈະຕ້ອງໄດ້ຜເຊີນໜ້າກັບບັນຫາຕ່າງໆ ໃນການທີ່ຈະຊັກນຳລ້ຽງລູກ ຊຶ່ງກຳລັງຈະກາຍມາເປັນຄົນອະເມຣິກັນຢູ່ແລ້ວ ພ້ອມດຽວກັບພົວພັນເຂົ້າໃນຣະບົບການສຶກສາໃໝ່ ຊຶ່ງເຂົາເຈົ້າບໍ່ເຄີຍໄດ້ພົບພໍ້ມາແຕ່ກ່ອນເລີຍ.

ອຸປກອນທີ່ໄດ້ຈັດທຳຂຶ້ນມານີ້ ແມ່ນເພື່ອໃຊ້ໃນອົງການສຶກສາຜູ້ໃຫຍ່ ເຊັ່ນຫ້ອງຮຽນພາສາອັງກິດເປັນພາສາທີສອງ, ການຈັດຕັ້ງປະຊາຄົມ ຫລື ການຈັດຕັ້ງຂອງພໍ່ແມ່ນັກຮຽນ ຊຶ່ງລວມແລ້ວກໍ່ມີຈຸດປະສົງຢາກໃຫ້ການຊຶດຊ່ວຍພໍ່ແມ່ຫລືຜູ້ປົກຄອງເດັກ ທີ່ມີຄວາມຮູ້ຈຳກັດດ້ານພາສາອັງກິດ ໃຫ້ເຂົາເຈົ້າຮູ້ສຶກປະກອບສ່ວນເຂົ້າໃກການຮ່ຳຮຽນຂອງພວກລູກໆໂດຍຈິງຈັງ.

ພວກເຮົາທີ່ອອກແບບອຸປກອນນີ້ ມີຈຸດປະສົງຢູ່ 3 ຢ່າງ ຄື:

1. ໃຊ້ຄວາມຮູ້ຄວາມສາມາດຂອງບັນດາພໍ່ແມ່ ທີ່ໄດ້ມີປະສົບການມາແຕ່ບ້ານເກີດເມືອງນອນຂອງເຂົາເຈົ້າ.

2. ຊຸກຍູ້ຊ່ວຍເຫລືອໃຫ້ບັນດາພໍ່ແມ່ຫລິງເຫັນເຂົາເຈົ້າເອງ ເໝືອນກັນກັບເປັນຄຣູຜູ້ສຳຄັນຜູ້ທຳອິດ. (ຄວາມນຶກຄິດອັນນີ້ ໄດ້ສູນເສັຽໄປໃນເວລາເປັນອົພຍົກ).

3. ສ້າງໂອກາດໃຫ້ບັນດາພໍ່ແມ່ໄດ້ສຶກສາປຽບທຽບສິ່ງທີ່ຄ້າຍຄືກັນ ຫລືແຕກຕ່າງກັນໃນສັງຄົມວັທນະທັມເກົ່າແລະໃໝ່, ທັງນີ້ ກໍ່ເພື່ອສ້າງສະພານເຊື່ອມລະຫວ່າງປະສົບການສອງຢ່າງນີ້

4. ສົ່ງເສີມໃຫ້ພໍ່ແມ່ໄຈ້ແຍກວ່າ ຄຸນຄ່າປະເພນີອັນໃດດີງາມທີ່ຄວນຮັກສາໄວ້.

ການຊ່ວຍເຫລືອໃຫ້ບັນດາພໍ່ແມ່ທີ່ຫາກໍ່ມາຮອດໃໝ່ໆນີ້ ໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບຣະບົບການສຶກສາ ແລະ ເຮັດໃຫ້ເຂົາເຈົ້າສາມາດມີບົດບາດໃນຂະບວນການສຶກສາ ເປັນສິ່ງທີ່ສຳຄັນມາກ. ຄຣູອາຈານແລະຜູ້ນຳການຈັດຕັ້ງຕ່າງໆ ຈະໃຊ້ອຸປກອນນີ້ ສຳລັບປັບປຸງຄວາມຮູ້ຄວາມຖນັດ ແລະ ຄວາມເຊື່ອໝັ້ນໃຫ້ພວກພໍ່ແມ່ເພື່ອເປັນບາດກ້າວທຳອິດ ໄປເຖິງການປະກອບສ່ວນເຕັມສ່ວນໃນການສຶກສາຂອງພວກລູກໆ.

ໂດຍຄວາມຮັກແພງ,

ໄດແອນ ປີກາເຣໂຣ　　　　ບຸນລ້ຽງ ພົມມະສູວັນ

ຄຳແນະນຳ

ການຊ່ວຍເຫລືອພວກນັກຮຽນໃຫ້ໄດ້ຮັບຄວາມສຳເຣັດໃນໂຮງຮຽນ

ພໍ່ແມ່ນັກຮຽນທີ່ຫາກໍ່ມາຮອດສະຫະຣັດອະເມຣິກາໃໝ່ໆ ສະແດງຄວາມເປັນຫ່ວງຕໍ່ການສຶກສາຂອງລູກຫລານເຂົາເຈົ້າຢູ່ເລື້ອຍໆ ແລະບໍ່ແນ່ໃຈກ່ຽວກັບບົດບາດຂອງຕົນຕໍ່ວິທີການຮຽນຂອງພວກລູກຫຼານ. ບົດຮຽນເຫລົ່ານີ້ ແມ່ນແນໃສ່ການແກ້ໄຂບັນຫາດັ່ງກ່າວ ເປັນບົດຮຽນທີ່ຢູ່ໃນແນວຄິດທີ່ວ່າຄອບຄົວເປັນຄືໂຮງຫລອມຫລໍ່ ບົ່ມນິໃສໃຈຄໍ ທາງທັສນະຄະດີ ທາງການກະຕຸ້ນຊຸກຍູ້ກຳລັງໃຈ ທາງຣະບຽບວິໄນ ແລະ ທາງການສ້າງຄຸນຄ່າຕົນເອງ. ຄຸນລັກສນະດັ່ງກ່າວນີ້ ມີອິດທິພົນອັນແຮງກ້າ ສາມາດຊີ້ຂາດວ່ານັກຮຽນຈະປະສົບຄວາມສຳເຣັດຫລືບໍ່ໃນຫ້ອງຮຽນ. ອີກຢ່າງນຶ່ງ ຄວາມສາມາດຂອງພໍ່ແມ່ ທີ່ຈະຊັກນຳສົ່ງເສີມການຮຽນຂອງລູກ ບໍ່ໄດ້ຂຶ້ນກັບຄວາມຮູ້ພື້ນຖານດ້ານພາສາອັງກິດແຕ່ຢ່າງໃດເລີຍ.

ອຸປກອນດັ່ງກ່າວນີ້ ແມ່ນແນໃສ່ການຊ່ວຍເຫລືອໃຫ້ພໍ່ແມ່ຮູ້ເຖິງພລັງຄວາມສາມາດຂອງເຂົາເຈົ້າ ທີ່ໄດ້ລ້ຽງດູລູກໆຈົນໃຫຍ່ກ້າໜ້າບານ ແລະໃຫ້ຄວາມໝັ້ນໃຈຕື່ມອີກວ່າ ຄວາມຊຳນິຊຳນານຂອງເຂົາເຈົ້າດັ່ງກ່າວມີຄຸນຄ່າສູງມາກ. ຫົວຂໍ້ເຣື່ອງທີ່ນຳມາສເນີນີ້ ຈະໃຊ້ເປັນຈຸດລິເລີ້ມໃນການສົນທະນາ ແລກປ່ຽນຄວາມຄິດເຫັນ ແລະໃຫ້ການຊ່ວຍເຫລືອຊຶ່ງກັນແລະກັນ ຣະຫວ່າງພວກພໍ່ແມ່ນັກຮຽນ.

ບົດຮຽນໄດ້ແບ່ງອອກເປັນ 3 ພາກດັ່ງນີ້:

1. ວັທນະທັມ: ສະພານເຊື່ອມ ວັທນະທັມໃໝ່ແລະເກົ່າ ຮຽນຮູ້ສິ່ງໃໝ່ ແຕ່ບໍ່ລະຖິ້ມສິ່ງເກົ່າ.
2. ໂຮງຮຽນ ແມ່ນພາກສ່ວນນຶ່ງຂອງວັທນະທັມ.
3. ພໍ່ແມ່ຄືຄູສອນ.

ແຕ່ລະບົດຮຽນຈະມີບົດອ່ານສັ້ນໆ ໃຊ້ເປັນຈຸດແນະນຳເຂົ້າໄປເຖິງຈຸດສຳຄັນຂອງບົດຮຽນ ຕິດຕາມດ້ວຍບົດຝຶກຫັດ ເພື່ອສຶກສາແລະສົນທະນາກັນ. ທ້າຍສຸດ ຈະຍົກເຣື່ອງບັນຫາໃດບັນຫານຶ່ງຂຶ້ນມາ ເພື່ອໃຫ້ມີການສົນທະນາອອກຄວາມຄິດຄວາມເຫັນຣະຫວ່າງພວກພໍ່ແມ່.

ວິທີດຳເນີນງານ ຈະຈັດໃຫ້ເປັນຄູ່ ເປັນໝວດນ້ອຍໆ ຫລືຈະເປັນກຸ່ມໃຫຍ່ກໍ່ໄດ້ ສຸດແລ້ວແຕ່ເໝາະສົມ.

ໃນຂະນະທີ່ພໍ່ແມ່ໄດ້ເພີ້ມພູນຄວາມຮູ້ຄວາມສາມາດ ແລະຄວາມເຊື່ອໝັ້ນໃນການລ້ຽງດູລູກ ໃນສັງຄົມວັທນະທັມອັນໃໝ່ນີ້ ຫວັງວ່າເຂົາເຈົ້າຈະຫັນມາໃຫ້ຄວາມສົນໃຈຕື່ມເປັນພິເສດ ໃນການສຶກສາຂອງພວກລູກໆ ບໍ່ວ່າໃນບ້ານຫລືໂຮງຮຽນກໍ່ດີ.

ຂໍ້ໃຫຍ່ໃຈຄວາມ

ຜົນຂອງການຄົ້ນຄວ້າກ່ຽວກັບບົດບາດຂອງພໍ່ແມ່ໃນການສຶກສາ ໄດ້ຊີ້ບອກດັ່ງນີ້:

- ພໍ່ແມ່ ເປັນຄຣູຜູ້ສຳຄັນຜູ້ທຳອິດ.
- ໂຮງຮຽນ ຕ້ອງການຄວາມຊ່ວຍເຫລືອຈາກພໍ່ແມ່.
- ການປາກເວົ້າພາສາອັງກິດໄດ້ຢ່າງຄ່ອງແຄ້ວນັ້ນ ບໍ່ແມ່ນສາເຫດຕົ້ນຕໍສຳຄັນທີ່ຈະຕ້ອງມີ ຈຶ່ງຈະສາມາດສ້າງບັນຍາກາດການຮຽນດີໄດ້.
- ຜົນຂອງການຮ່ຳຮຽນຈະເພີ້ມທະວີຂຶ້ນ ໃນກໍຣະນີທີ່ພໍ່ແມ່:

1. ສົ່ງເສີມໃຫ້ມີການສ້າງຄຸນຄ່າໃນຕົນເອງ ພ້ອມທັງຄວາມພູມໃຈໃນວັທນະທັມເດີມຂອງຕົນ.
2. ເຮັດໃຫ້ທາງໂຮງຮຽນຮູ້ວ່າ ພໍ່ແມ່ມີຄວາມສົນໃຈ ແລະໃຫ້ຄຸນຄ່າແກ່ໂຮງຮຽນ ໂດຍການໄປຢ້ຽມຢາມໂຮງຮຽນ, ສອບຖາມກ່າວເຖິງກິຈກັມຂອງໂຮງຮຽນ, ເອົາຜົນງານຂອງນັກຮຽນອອກສະແດງ ເຫລົ່ານີ້ເປັນຕົ້ນ.
3. ເວົ້າຈຳນຳລູກ ອ່ານຂໍ້ຄວາມ ຫລື ອະທິບາຍສິ່ງຕ່າງໆໃຫ້ເຂົາເຈົ້າໄດ້ເຂົ້າໃຈດີ.
4. ເບິ່ງຕິດຕາມບໍ່ໃຫ້ເຂົາເຈົ້າເບິ່ງໂທຣະທັດໃນເຣື້ອງບໍ່ເປັນປະໂຍດ ແລະ ບໍ່ໃຫ້ເຂົາເຈົ້າໃຊ້ເວລາເບິ່ງເຣື້ອງອື່ນໆນັ້ນຈົນເກີນຄວນ.
5. ຈັດຫາເວລາໃຫ້ສມ່ຳສເມີ ເຊັ່ນເວລາເຮັດວຽກບ້ານທີ່ຄຣູມອບໃຫ້ ເວລາກິນອາຫານ ແລະ ເວລາຫລັບນອນ.
6. ຈັດຫາສະຖານທີ່ເໝາະສົມ ໃຫ້ເປັນບ່ອນຮຽນຫນັງສືຕ່າງຫາກ.
7. ຈຳກັດເວລາໄປເຮັດການພາຍຫລັງເລີກໂຮງຮຽນ ໃຫ້ຢູ່ໃນຂອບເຂດ.

ບົດຮຽນທີ 1: ສ້າງສະພານເຊື່ອມວັທນະທັມໃຫມ່ແລະເກົ່າ

ວັທນະທັມແມ່ນຫຍັງ?

ພວກເຮົາຄືກັນກັບປາ. ວັທນະທັມຄືກັນກັບນ້ຳ ຊຶ່ງພວກເຮົາລອຍອາບຫລິ້ນຢູ່. ວັທນະທັມຢູ່ລ້ອມຕົວເຮົາເອງ ກໍ່ຄືກັນກັບນ້ຳຢູ່ລ້ອມຕົວເຮົາ ເມື່ອເຮົາລອຍອາບນ້ຳ, ເມື່ອເວລາປາກະໂດດເຕັ້ນອອກຈາກຫນອງບຶງຂຶ້ນສູ່ບົນອາກາດ, ໃນເວລານັ້ນ ປາຈະຮູ້ສຶກວ່າ ປາຕ້ອງການນ້ຳຫລາຍປານໃດ. ເມື່ອເວລາພວກເຮົາໄປຢູ່ຖິ່ນອື່ນເຫີນຫ່າງຈາກວັທນະທັມເດີມ ພວກເຮົາຮູ້ສຶກວ່າ ວັທນະທັມເດີມນັ້ນມີຄວາມສຳຄັນຕໍ່ເຮົາຫລາຍປານໃດ.

ໃຫ້ຄິດພິຈາຣະນາເບິ່ງຕໍ່ຄຳຖາມເຫລົ່ານີ້:

- ເຈົ້າເຄີຍກິນອາຫານປະເພດໃດ ແລະ ເວລາໃດເຈົ້າຮັບອາຫານ?
- ເຈົ້ານັບຖືສາສນາອັນໃດ?
- ຖ້າວ່າການກິນລ້ຽງຈັດສັນມີຂຶ້ນຕອນ 8:00 ໂມງ, ແມ່ນເວລາໃດເຈົ້າຈຶ່ງຈະໄປເຖິງບ່ອນນັ້ນ?
- ເມື່ອເວລາໃດຊາຍແລະຍິງຄວນແຕ່ງງານກັນ?
- ແມ່ນຫຍັງມີຄວາມສຳຄັນຕໍ່ເຈົ້າ?

ພວກກຸ່ມຊົນອື່ນມີວັທນະທັມແຕກຕ່າງກັນ ຈະໃຫ້ຄຳຕອບຕໍ່ຄຳຖາມເຫລົ່ານີ້ແຕກຕ່າງກັນໄປ. ກຸ່ມຊົນແຕ່ລະກຸ່ມ ກໍ່ມີວັທນະທັມຄົນລະຢ່າງ; ບໍ່ແມ່ນວ່າກຸ່ມຊົນທຸກໆຄົນຈະຕ້ອງນຸ່ງເຄື່ອງແບບດຽວກັນໄປຫມົດ ແລະ ໃຊ້ອາຫານຮັບປະທານແບບດຽວກັນ ຕລອດທັງແນວຄິດຂອງເຂົາເຈົ້າກໍ່ມີຄວາມແຕກຕ່າງກັນອີກດ້ວຍ.

<u>ກິຈກັມ: ຕາຕລາງກ່ຽວກັບວັທນະທັມ</u>

ກ. ໃຫ້ຍົກເອົາວັທນະທັມຂອງພວກທ່ານ ແລະ ວັທນະທັມຂອງຊາວອະເມຣິກັນມາປຽບທຽບກັນ. ໃຫ້ຂຽນສິ່ງຕ່າງໆ ຊຶ່ງແຕກຕ່າງກັນຕາມຕາຕລາງຂ້າງລຸ່ມນີ້. ໃຫ້ຄຳຕອບຕ່າງໆໄປສຶກສາສົນທະນາໃນກຸ່ມ ຫລືຄະນະຂອງພວກທ່ານ.

ຕາຕລາງວັທນະທັມ

	ວັທນະທັມຂອງເຮົາ	ວັທນະທັມຂອງອະເມຣິກັນ
ອາຫານ		
ການສູບຢາ		
ເຄື່ອງນຸ່ງຫົ່ມ		
ການຂັບຂີ່ຍານຍົນ		
ການວາງທ່າທີໃນໜ້າທີ່ວຽກງານ		
ຄອບຄົວ		
ພໍ່ແມ່		
ໝູ່ເພື່ອນ		
ສິ່ງສຳຄັນທີ່ສຸດໃນໂລກນີ້		

BEST COPY AVAILABLE

ກິຈກັມ: ຕາຕລາງກ່ຽວກັບວັທນະທັມ(ຕໍ່)

ຕາຕລາງວັທນະທັມ

	ວັທນະທັມຂອງເຮົາ	ວັທນະທັມຂອງອະເມຣິກັນ
ຜູ້ເຖົ້າຜູ້ແກ່		
ໂຮງຮຽນ		
ຄຣູສອນ		
ສາສນາ		
ເງິນ		
ການປິ່ນປົວພຍາດ		
ການແຕ່ງງານ		
ການນັດພົບ ບ່າວສາວ		
ເດັກນ້ອຍ		

BEST COPY AVAILABLE

໒. ຄຳຖາມເພີ້ມເຕີມເພື່ອສຶກສາສົນທະນາ:

1. ໃຫ້ຄິດຫາສິ່ງທີ່ຄ້າຍຄືກັນໃນວັທນະທັມໃຫມ່ແລະເກົ່າ.

2. ສິ່ງໃດຊຶ່ງມາຈາກວັທນະທັມຂອງພວກທ່ານ ທີ່ທ່ານຕ້ອງການຮັກສາໄວ້ຢູ່ໃນສະຫະຣັຖ?

3. ສິ່ງໃດ ຊຶ່ງເປັນການຫຍຸ້ງຍາກທີ່ຈະຮັກສາໄວ້ໃນສະຫະຣັຖ?

ການສ້າງຄວາມພູມໃຈໃນວັທນະທັມເດີມ

ລູກຂອງທ່ານທີ່ເຕີບໂຕຂຶ້ນໃນສະຫະຣັດ ຈະມີວັທນະທັມສອງຢ່າງດ້ວຍກັນຄື: ວັທນະທັມເດີມຂອງຄອບຄົວ ແລະ ວັທນະທັມໃຫມ່ຂອງອະເມຣິກາ. ຖືວ່າເຂົາເຈົ້າເປັນຄົນໂຊກດີ ແຕ່ເຂົາເຈົ້າຈຳຕ້ອງບຸກເບີກວຽກງານອັນຫນັກຫນ່ວງນີ້ໃຫ້ສຳເຣັດ.

ການມີສອງວັທນະທັມນີ້ ບໍ່ແມ່ນການກະທຳກັນໄດ້ງ່າຍໆ. ພາກສ່ວນຂອງວັທນະທັມເດີມ ຈະສູນເສັຽໄປໃນຂະນະທີ່ເດັກກຳລັງຮຽນເອົາວັທນະທັມໃຫມ່. ບາງຄັ້ງເຂົາເຈົ້າຕ້ອງໄດ້ພົບກັບຄວາມຫຍຸ້ງຍາກ ເພື່ອຕັດສິນໃຈເລືອກລະຫວ່າງແນວຄິດຂອງຄອບຄົວ ແລະ ແນວຄິດທີ່ເຂົາເຈົ້າພົບພໍ້ໃນໂທຣະທັດ, ຕາມໂຮງພາພຍົນ ແລະ ໃນໂຮງຮຽນ.

ຄອບຄົວແລະປະຊາຄົມສາມາດເຮັດຫລາຍຢ່າງເພື່ອຮັກສາວັທນະທັມເດີມໄວ້ໃນສະຫະຣັດ ເຊັ່ນ ສິດສອນໃຫ້ເດັກຮຽນຮູ້ເຖິງວັທນະທັມເດີມຂອງພໍ່ແມ່ເຂົາເຈົ້າເພື່ອບໍ່ໃຫ້ເຂົາເຈົ້າຫລົງລືມ ແລະ ເຮັດໃຫ້ເຂົາເຈົ້າຮູ້ສຶກສະບາຍໃຈໃນສອງວັທນະທັມ.

ກິດຈະກັມ: ໃຫ້ຂຽນເປັນຂໍ້ ແລະ ສົນທະນາກັນ

ກ. ເປັນຫຍັງຈຶ່ງມີຄວາມສຳຄັນ ທີ່ຈຳເປັນຕ້ອງຮັກສາວັທນະທັມເດີມໄວ້ໃນສະຫະຣັດ?

1.

2.

3.

ຂ. ທ່ານເຮັດສິ່ງໃດແດ່ ເພື່ອຮັກສາວັທນະທັມເດີມໄວ້ ແລະ ຫລີກເວັ້ນບໍ່ໃຫ້ຫລົງລືມ.

1.

2.

3.

<u>ວຽກບ້ານ</u>

ໃຫ້ສັງເກດເບິ່ງກິດຈະກັມຂ້າງລຸ່ມນີ້ ຊອກເອົາຂໍ້ນຶ່ງໄປປະຕິບັດໃນຄອບຄົວຂອງທ່ານ ຕຣຽມແລະລາຍງານຕໍ່ກຸ່ມໃນການປະຊຸມຄັ້ງໜ້າ.

1. ເລີ້ມປະກອບສມຸດເກັບຮູບອັດ ແລະຮູບແຕ້ມ ກ່ຽວກັບວັທນະທັມຂອງທ່ານ.

2. ພາລູກຫລິ້ນເກມ ທີ່ທ່ານໄດ້ຣຽນຫລິ້ນເມື່ອເວລາຍັງນ້ອຍ.

3. ເລົ່ານິທານທີ່ພໍ່ແມ່ຂອງທ່ານໄດ້ເລົ່າສູ່ຟັງ ໃຫ້ລູກຟັງ.

4. ສອນໃຫ້ລູກຮ້ອງເພງ ຫລືສອນບົດຟ້ອນທີ່ທ່ານໄດ້ຣຽນຮູ້ ເມື່ອເວລາທ່ານຍັງນ້ອຍ.

5. ເຮັດສິ່ງໃດສິ່ງນຶ່ງຂຶ້ນຮ່ວມກັບລູກຂອງທ່ານ. ສິ່ງນີ້ເປັນສິ່ງທີ່ທ່ານໄດ້ຣຽນເຮັດຈາກຄອບຄົວຂອງທ່ານ.

6. ເອົາຂອງສິ່ງໃດສິ່ງນຶ່ງໃຫ້ລູກຂອງທ່ານນຳໄປໂຮງຣຽນ ເພື່ອອະທິບາຍໃຫ້ຄູຟັງ. ຂອງເຫລົ່ານີ້ຈະຕ້ອງເປັນສ່ວນຈາກວັທນະທັມເດີມຂອງທ່ານ ເຊັ່ນ: ຮູບອັດ, ເຄື່ອງດົນຕຣີ, ອາຫານ, ເຄື່ອງນຸ່ງຖືພິເສດ, ເປັນຕົ້ນ.

7. ຂໍ້ສເນີຈາກທ່ານ: ____

   ____

   ____

   ____

   ____

8. ງານຮ່ວມມືໄປປະຕິບັດ (ເບິ່ງຕໍ່ໜ້າໄປ)

ງານຮ່ວມມືເພື່ອເຮົາໄປປະຕິບັດ: ພໍ່ແມ່ແລະລູກ:
Cooperative Assignment: Parents & Children

ເວລາສຳຄັນໃນຊີວິດເຮົາ

Important Times in Our Lives



ວິທີປະຕິບັດ

1. ເຮັດວຽກຮ່ວມກັບລູກ.
2. ຄັດເລືອກເອົາອາຍຸໃນຊ່ວງໄລຍະຕ່າງໆ.
3. ຂຽນເລື່ອງສຳຄັນທີ່ເກີດຂຶ້ນໃນຊ່ວງອາຍຸຂອງແຕ່ລະຄົນ.
4. ປຽບທຽບສິ່ງຕ່າງໆທີ່ເກີດຂຶ້ນ ທີ່ຄ້າຍຄືກັນ ແລະ ທີ່ແຕກຕ່າງກັນ.
5. ນຳປັນຫາຂຶ້ນມາສົນທະນາກັນວ່າ ເປັນຫຍັງວັທນະທັມເກົ່າແລະໃໝ່ ຈິ່ງແຕກຕ່າງກັນ?

ຕົວຢ່າງ: ເດັກອາຍຸ 5 ປີ ເລີ່ມເຂົ້າໂຮງຮຽນ
ສມັຍພໍ່ແມ່ ອາຍຸ 6 ປີ ຈິ່ງເລີ່ມເຂົ້າໂຮງຮຽນ

<u>ບົດອ່ານ: ປັນຫາເຣື້ອງ</u>

ທ້າວຣາຍແລະລູກຂອງລາວ

ທ້າວຣາຍມີອາຍຸ 55 ປີ. ລາວມາຈາກວຽດນາມ ພ້ອມດ້ວຍເມັຽແລະລູກ 4 ຄົນ. ລາວປາກພາສາອັງກິດໄດ້ຫນ້ອຍນຶ່ງ. ລູກລາວປາກພາສາອັງກິດໄດ້ດີ ແລະ ມີ ຫມູ່ເພື່ອນອະເມຣິກັນ. ລູກຜູ້ໃຫຍ່ຂອງລາວອ່ານຫນັງສືວຽດໄດ້, ແຕ່ບໍ່ປາກປາກພາສາວຽດ. ສ່ວນລູກຜູ້ນ້ອຍຂອງລາວຮູ້ປາກພາສາວຽດໄດ້ເລັກນ້ອຍ. ເຣື້ອງດັ່ງກ່າວເຮັດໃຫ້ທ້າວຣາຍບໍ່ມີຄວາມສະບາຍໃຈ.

ທ້າວຣາຍເສົ້າໃຈແລະໂກດເຄືອງໃຈກັບເຣື້ອງອື່ນໆອີກດ້ວຍ. ເດັກນ້ອຍນຸ່ງເຄື່ອງແບບແປກປະຫລາດ. ພວກເຂົາໄວ້ຊົງຜົມກໍເປັນຫນ້າຢາກຫົວ. ພວກລູກຂອງລາວເຮັດໃຫ້ລາວມີຄວາມຫຍຸ້ງໃຈຫລາຍ.

<u>ຄຳຖາມ:</u>

1. ເປັນຫຍັງທ້າວຣາຍຈຶ່ງເສົ້າໃຈ?

2. ທ້າວຣາຍ ຈະສາມາດອະທິບາຍບັນຫາຂອງລາວເປັນພາສາອັງກິດແບບໃດ?

3. ກ. ແມ່ນບັນຫາອັນໃດ ຊຶ່ງລາວສາມາດຖາມລູກລາວໄດ້?
   ຂ. ທ່ານຄິດວ່າລູກລາວຈະຕອບລາວແບບໃດ?

4. ແມ່ນບຸກຄົນໃດໃນກຸ່ມຊົນຂອງຊາວວຽດນາມ ຊຶ່ງທ້າວຣາຍຈະສາມາດນຳເອົາບັນຫາຂອງລາວໄປປຶກສາຫາລືນຳໄດ້?

5. ຢູ່ໃນໂຮງຮຽນແມ່ນບຸກຄົນໃດ ຊຶ່ງທ້າວຣາຍຈະນຳເອົາບັນຫາຂອງລາວໄປປຶກສາຫາລືນຳໄດ້.

6. ທ່ານມີແນວທາງທີ່ຈະໃຫ້ການປຶກສາຫາລືແກ່ທ້າວຣາຍໄດ້ບໍ່?

Limited English Proficient (LEP)

Parent Involvement Project

ໂຄງການພົວພັນພໍ່ແມ່ນັກຮຽນທີ່ຂາດພື້ນຖານພາສາອັງກິດ

2

ກຣົມສຶກສາປະຈຳຣັຖມິນນີໂຊຕາ
ຜແນກປະຊາສຶກສາແລະສຶກສາຜູ້ໃຫຍ່
ນ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາອັງກິດ

Minnesota Department of Education
Community and Adult Education Section
Limited English Proficiency Education Unit

ຣະດູໃບໄມ້ປົ່ງ ໑໙໙໑ Spring, 1991

MODULE 2

SCHOOLS ARE PART OF THE CULTURE

ບົດຮຽນ ທີ່ 2

ໂຮງຮຽນແມ່ນພາກສ່ວນນຶ່ງຂອງວັທນະທັມ

ຄຳຂອບໃຈ

ປະມວນບົດຮຽນເຫລົ່ານີ້ ເປັນຜົນງານຮ່ວມມືຂອງ ຍານາງ ໄດແອນ ປີກາເຣໂຣ ຜແນກປະຊາສຶກສາ ແລະ ສຶກສາຜູ້ໃຫຍ່ ແລະ ທ່ານ ດຣ. ບຸນລ້ຽງ ພິມມະສຸວັນ ຫນ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາອັງກິດ.

ຍານາງ ຈຸດິດ ສະໄຕ ອະດີດຄູຮສອນພາສາອັງກິດເປັນພາສາທີສອງ ຊຶ່ງປັດຈຸບັນນີ້ທຳຫນ້າທີ່ເປັນຄຣູສອນຢູ່ໂຮງຮຽນມັທຍົມພາກຕົ້ນແຊນຟອດ ໃນເມືອງມິນນີອາໂປລິສ ຊ່ວຍອອກແບບແລະຂຽນປຶ້ມອຸປກອນການສອນດັ່ງກ່າວ.

ລະດູໃບໄມ້ປົ່ງ 1990

ທ່ານ ທີ່ຮັກແພງ,

ໄດ້ມີຂະບວນການຂັ້ນຊາດ ທີ່ສົ່ງເສີມໃຫ້ບັນດາພໍ່ແມ່ ມີສິ່ງກ່ຽວພົວພັນໃນການສຶກສາຂອງພວກລູກໆ. ພວກເຮົາສນັບສນູນໃນແນວຄິດດັ່ງກ່າວ ໂດຍສະເພາະແລ້ວສຳລັບຄອບຄົວ ຊຶ່ງເປັນຊາວອົພຍົບລີ້ໄພ ຫລືຊາວອົພຍົບທົ່ວໄປ ທີ່ໄດ້ເຂົ້າມາອາໄສຢູ່ສະຫະຣັດອະເມຣິກາ ໃນໄລຍະ 20 ປີ ທີ່ຜ່ານມານີ້ ແລະຂາດພື້ນຖານດ້ານພາສາອັງກິດ. ຊາວອົພຍົບດັ່ງກ່າວ ຈະຕ້ອງໄດ້ຜເຊີນໜ້າກັບບັນຫາຕ່າງໆ ໃນການທີ່ຈະຊັກນຳລ້ຽງລູກ ຊຶ່ງກຳລັງຈະກາຍມາເປັນຄົນອະເມຣິກັນຢູ່ແລ້ວ ພ້ອມດຽວກັບພົວພັນເຂົ້າໃນຣະບົບການສຶກສາໃໝ່ ຊຶ່ງເຂົາເຈົ້າບໍ່ເຄີຍໄດ້ພົບພໍ້ມາແຕ່ກ່ອນເລີຍ.

ອຸປກອນທີ່ໄດ້ຈັດທຳຂຶ້ນມານີ້ ແມ່ນເພື່ອໃຊ້ໃນອົງການສຶກສາຜູ້ໃຫຍ່ ເຊັ່ນຫ້ອງຮຽນພາສາອັງກິດເປັນພາສາທີສອງ, ການຈັດຕັ້ງປະຊາຄົມ ຫລື ການຈັດຕັ້ງຂອງພໍ່ແມ່ນັກຮຽນ ຊຶ່ງລວັນແລ້ວກໍ່ມີຈຸດປະສົງຢາກໃຫ້ການຊິດຊວ່ຍພໍ່ແມ່ຫລືຜູ້ປົກຄອງເດັກ ທີ່ມີຄວາມຮູ້ຈຳກັດດ້ານພາສາອັງກິດ ໃຫ້ເຂົາເຈົ້າຮູ້ສຶກປະກອບສ່ວນເຂົ້າໃກການຮ່ຳຮຽນຂອງພວກລູກໆໂດຍຈິງຈັງ.

ພວກເຮົາທີ່ອອກແບບອຸປກອນນີ້ ມີຈຸດປະສົງຢູ່ 3 ຢ່າງ ຄື:

1. ໃຊ້ຄວາມຮູ້ຄວາມສາມາດຂອງບັນດາພໍ່ແມ່ ທີ່ໄດ້ມີປະສົບການມາແຕ່ບ້ານເກີດເມືອງນອນຂອງເຂົາເຈົ້າ.

2. ຊຸກຍູ້ຊວ່ຍເຫລືອໃຫ້ບັນດາພໍ່ແມ່ຫລິງເຫັນເຂົາເຈົ້າເອງ ເໝືອນກັນກັບເປັນຄຣູຜູ້ສຳຄັນຜູ້ທຳອິດ. (ຄວາມນຶກຄິດອັນນີ້ ໄດ້ສູນເສັຽໄປໃນເວລາເປັນອົພຍົກ).

3. ສ້າງໂອກາດໃຫ້ບັນດາພໍ່ແມ່ໄດ້ສຶກສາປຽບທຽບສິ່ງທີ່ຄ້າຍຄືກັນ ຫລືແຕກຕ່າງກັນໃນສັງຄົມວັທນະທັມເກົ່າແລະໃໝ່, ທັງນີ້ ກໍ່ເພື່ອສ້າງສະພານເຊື່ອມລະຫວ່າງປະສົບການສອງຢ່າງນີ້

4. ສົ່ງເສີມໃຫ້ພໍ່ແມ່ໃຈ້ແຍກວ່າ ຄຸນຄ່າປະເພນີອັນໃດດີງາມທີ່ຄວນຮັກສາໄວ້.

ການຊວ່ຍເຫລືອໃຫ້ບັນດາພໍ່ແມ່ທີ່ຫາກໍ່ມາຮອດໃໝ່ໆນີ້ ໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບຣະບົບການສຶກສາ ແລະ ເຮັດໃຫ້ເຂົາເຈົ້າສາມາດມີບົດບາດໃນຂະບວນການສຶກສາ ເປັນສິ່ງທີ່ສຳຄັນມາກ. ຄຣູອາຈານແລະຜູ້ນຳການຈັດຕັ້ງຕ່າງໆ ຈະໃຊ້ອຸປກອນນີ້ ສຳລັບປັບປຸງຄວາມຮູ້ຄວາມຖນັດ ແລະ ຄວາມເຊື່ອໝັ້ນໃຫ້ພວກພໍ່ແມ່ ເພື່ອເປັນບາດກ້າວທຳອິດ ໄປເຖິງການປະກອບສ່ວນເຕັມສ່ວນໃນການສຶກສາຂອງພວກລູກໆ.

ໂດຍຄວາມຮັກແພງ,

ໄດແອນ ປີກາເຣໂຣ   ບຸນລ້ຽງ ພິມມະສູວັນ

ຄໍາແນະນໍາ

ການຊ່ວຍເຫລືອພວກນັກຮຽນໃຫ້ໄດ້ຮັບຄວາມສໍາເຣັດໃນໂຮງຮຽນ

ພໍ່ແມ່ນັກຮຽນທີ່ຫາກໍ່ມາຮອດສະຫະຣັດອະເມຣິກາໃຫມ່ໆ ສະແດງຄວາມເປັນຫວ່ງຕໍ່ການສຶກສາຂອງລູກຫລານເຂົາເຈົ້າຢູ່ເລື້ອຍໆ ແລະບໍ່ແນ່ໃຈກ່ຽວກັບບົດບາດຂອງຕົນຕໍ່ວິທີການຮຽນຂອງພວກລູກຫຼານ. ບົດຮຽນເຫລົ່ານີ້ ແມ່ນແນໃສ່ການແກ້ໄຂບັນຫາດັ່ງກ່າວ ເປັນບົດຮຽນທີ່ຢູ່ໃນແນວຄິດທີ່ວ່າຄອບຄົວເປັນຄືໂຮງຫລອມຫລໍ່ ບົ່ມນິໄສໃຈຄໍ ທາງທັສນະຄະຕິ ທາງການກະຕຸ້ນຊຸກຍູ້ກໍາລັງໃຈ ທາງຣະບຽບວິໄນ ແລະ ທາງການສ້າງຄຸນຄ່າຕົນເອງ. ຄຸນລັກສນະດັ່ງກ່າວນີ້ ມີອິດທິພົນອັນແຮງກ້າ ສາມາດຊີ້ຂາດວ່ານັກຮຽນຈະປະສົບຄວາມສໍາເຣັດຫລືບໍ່ໃນຫ້ອງຮຽນ. ອີກຢ່າງນຶ່ງ ຄວາມສາມາດຂອງພໍ່ແມ່ ທີ່ຈະຊຸກນໍາສົ່ງເສີມການຮຽນຂອງລູກ ບໍ່ໄດ້ຂຶ້ນກັບຄວາມຮູ້ພື້ນຖານດ້ານພາສາອັງກິດແຕ່ຢ່າງໃດເລີຍ.

ອຸປກອນດັ່ງກ່າວນີ້ ແມ່ນແນໃສ່ການຊ່ວຍເຫລືອໃຫ້ພໍ່ແມ່ຮູ້ເຖິງພລັງຄວາມສາມາດຂອງເຂົາເຈົ້າ ທີ່ໄດ້ລ້ຽງດູລູກໆຈົນໃຫຍ່ກ້າຫນ້າບານ ແລະໃຫ້ຄວາມຫມັ້ນໃຈຕື່ມອີກວ່າ ຄວາມຊໍານິຊໍານານຂອງເຂົາເຈົ້າດັ່ງກ່າວມີຄຸນຄ່າສູງມາກ. ຫົວຂໍ້ເຣື້ອງທີ່ນໍາມາສເນີນີ້ ຈະໃຊ້ເປັນຈຸດລິເລີ້ມໃນການສົນທະນາ ແລກປ່ຽນຄວາມຄິດເຫັນ ແລະໃຫ້ການຊ່ວຍເຫລືອຊຶ່ງກັນແລະກັນ ຣະຫວ່າງພວກພໍ່ແມ່ນັກຮຽນ.

ບົດຮຽນໄດ້ແບ່ງອອກເປັນ 3 ພາກດັ່ງນີ້:

1. ວັທນະທັມ: ສະພານເຊື່ອມ ວັທນະທັມໃຫມ່ແລະເກົ່າ ຮຽນຮູ້ສິ່ງໃຫມ່ ແຕ່ບໍ່ລະຖິ້ມສິ່ງເກົ່າ.
2. ໂຮງຮຽນ ແມ່ນພາກສ່ວນນຶ່ງຂອງວັທນະທັມ.
3. ພໍ່ແມ່ຄືຄູສອນ.

ແຕ່ລະບົດຮຽນຈະມີບົດອ່ານສັ້ນໆ ໃຊ້ເປັນຈຸດແນະນໍາເຂົ້າໄປເຖິງຈຸດສໍາຄັນຂອງບົດຮຽນ ຕິດຕາມດ້ວຍບົດຝຶກຫັດ ເພື່ອສຶກສາແລະສົນທະນາກັນ. ທ້າຍສຸດ ຈະຍົກເຣື້ອງບັນຫາໃດບັນຫານຶ່ງຂຶ້ນມາ ເພື່ອໃຫ້ມີການສົນທະນາອອກຄວາມຄິດຄວາມເຫັນຣະຫວ່າງພວກພໍ່ແມ່.

ວິທີດໍາເນີນງານ ຈະຈັດໃຫ້ເປັນຄູ່ ເປັນຫມວດນ້ອຍໆ ຫລືຈະເປັນກຸ່ມໃຫຍ່ໆກໍ່ໄດ້ ສຸດແລ້ວແຕ່ເຫມາະສົມ.

ໃນຂະນະທີ່ພໍ່ແມ່ໄດ້ເພີ້ມພູນຄວາມຮູ້ຄວາມສາມາດ ແລະຄວາມເຊື່ອຫມັ້ນໃນການລ້ຽງດູລູກ ໃນສັງຄົມວັທນະທັມອັນໃຫມ່ນີ້ ຫວັງວ່າເຂົາເຈົ້າຈະຫັນມາໃຫ້ຄວາມສົນໃຈຕື່ມເປັນພິເສດ ໃນການສຶກສາຂອງພວກລູກໆບໍ່ວ່າໃນບ້ານຫລືໂຮງຮຽນກໍ່ຕີ.

BEST COPY AVAILABLE

ຂໍ້ໃຫຍ່ໃຈຄວາມ

ຜົນຂອງການຄົ້ນຄວ້າກ່ຽວກັບບົດບາດຂອງພໍ່ແມ່ໃນການສຶກສາ ໄດ້ຊີ້ບອກດັ່ງນີ້:

- ພໍ່ແມ່ ເປັນຄູຜູ້ສຳຄັນຜູ້ທຳອິດ.
- ໂຮງຮຽນ ຕ້ອງການຄວາມຊ່ວຍເຫລືອຈາກພໍ່ແມ່.
- ການປາກເວົ້າພາສາອັງກິດໄດ້ຢ່າງຄ່ອງແຄ້ວນັ້ນ ບໍ່ແມ່ນສາເຫດຕົ້ນຕໍສຳຄັນທີ່ຈະຕ້ອງມີ ຈຶ່ງຈະສາມາດສ້າງບັນຍາກາດການຮຽນດີໄດ້.
- ຜົນຂອງການຮ່ຳຮຽນຈະເພີ້ມທະວີຂຶ້ນ ໃນກໍຣະນີທີ່ພໍ່ແມ່:

  1. ສົ່ງເສີມໃຫ້ມີການສ້າງຄຸນຄ່າໃນຕົນເອງ ພ້ອມທັງຄວາມພູມໃຈໃນວັທນະທັມເດີມຂອງຕົນ.
  2. ເຮັດໃຫ້ທາງໂຮງຮຽນຮູ້ວ່າ ພໍ່ແມ່ມີຄວາມສົນໃຈ ແລະໃຫ້ຄຸນຄ່າແກ່ໂຮງຮຽນ ໂດຍການໄປຢ້ຽມຢາມໂຮງຮຽນ, ສອບຖາມກ່າວເຖິງກິຈກັມຂອງໂຮງຮຽນ, ເອົາຜົນງານຂອງນັກຮຽນອອກສະແດງ ເຫລົ່ານີ້ເປັນຕົ້ນ.
  3. ເວົ້າຈຳນຳລູກ ອ່ານຂໍ້ຄວາມ ຫລື ອະທິບາຍສິ່ງຕ່າງໆໃຫ້ເຂົາເຈົ້າໄດ້ເຂົ້າໃຈດີ.
  4. ເບິ່ງຕິດຕາມບໍ່ໃຫ້ເຂົາເຈົ້າເບິ່ງໂທຣະທັດໃນເລື້ອງບໍ່ເປັນປະໂຍດ ແລະ ບໍ່ໃຫ້ເຂົາເຈົ້າໃຊ້ເວລາເບິ່ງເລື້ອງອື່ນໆນັ້ນຈົນເກີນຄວນ.
  5. ຈັດຫາເວລາໃຫ້ສມ່ຳສເມີ ເຊັ່ນເວລາເຮັດວຽກບ້ານທີ່ຄູມອບໃຫ້ ເວລາກິນອາຫານ ແລະ ເວລາຫລັບນອນ.
  6. ຈັດຫາສະຖານທີ່ເຫມາະສົມ ໃຫ້ເປັນບ່ອນຮຽນຫນັງສືຕ່າງຫາກ.
  7. ຈຳກັດເວລາໄປເຮັດການພາຍຫລັງເລີກໂຮງຮຽນ ໃຫ້ຢູ່ໃນຂອບເຂດ.

ບົດຮຽນທີ 2: ໂຮງຮຽນແມ່ນສ່ວນນຶ່ງຂອງວັທນະທັມ

ໂຮງຮຽນແຕ່ລະບ່ອນບໍ່ຄ້າຍຄືກັນ. ໂຮງຮຽນມີຄວາມແຕກຕ່າງກັນໄປແຕ່ລະປະເທດ ແລະ ແຕ່ລະວັທນະທັມ. ບັນດາຄູສອນກໍ່ມີຄວາມຮັບຜິດຊອບແຕກຕ່າງກັນໄປ. ການສຶກສາຮ່ຳຮຽນຂອງພວກນັກຮຽນ ການປະພຶດປະຕິບັດກໍແຕກຕ່າງກັນໄປທັງນັ້ນ.

<u>ວິທີປະຕິບັດ</u>:

1. ໃຫ້ຍົກເອົາສະພາບໂຮງຮຽນທີ່ບ້ານເກີດເມືອງນອນຂອງທ່ານຂຶ້ນມາສຶກສາ.
2. ໃຫ້ຂຽນຕອບວ່າ ຖືກ ຫລື ຜິດ ໃນຂໍ້ຄວາມຂ້າງລຸ່ມນີ້.
3. ນຳເອົາຄຳຕອບໄປປຶກສາກັບຄນະໃນກຸ່ມຂອງຕົນ.

ກ. ຢູ່ໃນປະເທດຂອງຂ້າພະເຈົ້າ:

_____ 1. ເດັກນ້ອຍທຸກຄົນໄປໂຮງຮຽນ.
_____ 2. ເດັກນ້ອຍໄປໂຮງຮຽນຈົນພວກເຂົາມີອາຍຸເຖິງ 16 ປີ.
_____ 3. ພວກນັກຮຽນໃຫ້ຄວາມເຄົາຣົບນັບຖືຕໍ່ຄູສອນ.
_____ 4. ພໍ່ແມ່ຊ່ວຍເດັກເຮັດວຽກການຮຽນ ທີ່ຄູເອົາໃຫ້ໄປເຮັດຢູ່ບ້ານ.
_____ 5. ພວກນັກຮຽນໃຊ້ຄວາມຈົດຈຳເອົາຂໍ້ຄວາມຫລາຍຢ່າງ.
_____ 6. ມີວຽກການຮຽນໃຫ້ເຮັດຢູ່ບ້ານຫລາຍ.
_____ 7. ບັນດາຄູສອນເປັນເພື່ອນກັບພວກນັກຮຽນ.
_____ 8. ທຸກຄົນໃນປະເທດຂອງຂ້າພະເຈົ້າຮຽນອ່ານແລະຮຽນຂຽນ.
_____ 9. ຄູສອນອາດຈະຕີລູກສິດ ຖ້າພວກເຂົາກະທຳສິ່ງທີ່ບໍ່ຖືກ.
_____10. ພວກນັກຮຽນໄປໂຮງຮຽນ 5 ວັນ ໃນອາທິດນຶ່ງ.

ຂ. ໃຫ້ກ່າຍເອົາຂໍ້ຄວາມທີ່ເຫັນວ່າຖືກຕ້ອງ ແລ້ວຂຽນເປັນວັກ ຫລື ຂຽນເປັນປະໂຍດ.

____

____

____

____

____

ໂຮງຮຽນແມ່ນພາກສ່ວນນຶ່ງຂອງວັດທະນະທັມ

ວິທີປະຕິບັດ:

ໃຫ້ປຽບທຽບໂຮງຮຽນຢູ່ໃນປະເທດຂອງພວກທ່ານ ແລະ ໂຮງຮຽນໃນສະຫະຣັຖອະເມຣິກາ. ຊອກຫາສິ່ງທີ່ມີຄວາມແຕກຕ່າງກັນ. ໃຫ້ຂຽນຂໍ້ຄວາມໃສ່ໃນຕາຕະລາງຂ້າງລຸ່ມນີ້. ແລ້ວສຶກສາແລກປ່ຽນຄວາມຄິດເຫັນ ກ່ຽວກັບຄຳຕອບຂອງທ່ານກັບບຸກຄົນຢູ່ໃນກຸ່ມຄນະຂອງທ່ານ.

ຕາຕະລາງໂຮງຮຽນ

	ຢູ່ໃນປະເທດຂອງຂ້າພະເຈົ້າ	ຢູ່ໃນສະຫະຣັຖອະເມຣິກາ
ແມ່ນໃຜໄປໂຮງຮຽນ?		
ໜ້າທີ່ຂອງໂຮງຮຽນ ແມ່ນຫຍັງ?		
ພວກນັກຮຽນເຂົ້າຮຽນ ເຖິງກຳນົດຈັກປີ?		
ຄູສອນແບບໃດ? ຕົວຢ່າງ: ກ່າຍບົດຮຽນ, ແລກປ່ຽນ ຄວາມເຫັນ ໃນໝູ່ຄນະ, ວາງຄຳຖາມຕ່າງໆ		
ນັກຮຽນໃນຫ້ອງຮຽນວາງ ຕົວຢ່າງໃດ?		
ຄູສອນວິຊາໃດແດ່?		

BEST COPY AVAILABLE

	ຢູ່ໃນປະເທດຂອງຂ້າພະເຈົ້າ	ຢູ່ໃນສະຫະລັດອະເມຣິກາ
ພວກເຂົາເຈົ້າໃຊ້ອັນໃດຊ່ວຍໃນການຮຽນ? (ປຶ້ມອ່ານ, ຮູບເງົາ, ຫ້ອງສມຸດ, ການໄປທັສນະສຶກສາ, ຫ້ອງຄົ້ນຄວ້າ ແລະ ອື່ນໆ.)		
ເປັນຫຍັງຄົນຈຶ່ງພາກັນໄປໂຮງຮຽນ?		
ພວກນັກຮຽນປະພຶດຕົນແບບໃດຕໍ່ຄູສອນ?		
ວຽກການຮຽນເຮັດຢູ່ບ້ານມີຫລາຍເທົ່າໃດ?		
ມີກິຈການນອກໂມງຮຽນ ເຊັ່ນ ສະໂມສອນ ແລະ ການກິລາບໍ່?		
ພວກພໍ່ແມ່ນັກຮຽນຊ່ວຍລູກຂອງຕົນແບບໃດໃນໂຮງຮຽນ?		

<u>ຄຳຖາມເພີ້ມເຕີມເພື່ອສົນທະນາແລກປ່ຽນຄວາມຄິດເຫັນ:</u>

ກ. ໃຫ້ຊອກຫາສິ່ງທີ່ຄ້າຍຄືກັນລະຫວ່າງ ໂຮງຮຽນໃນປະເທດເກົ່າ ແລະ ປະເທດໃໝ່ຂອງທ່ານ.

ຂ. ຄວາມແຕກຕ່າງລະຫວ່າງໂຮງຮຽນໃນປະເທດເກົ່າ ແລະ ປະເທດໃໝ່ ທີ່ເຫັນວ່າສຳຄັນທີ່ສຸດ.

BEST COPY AVAILABLE

<u>ບົດອ່ານ: ບັນຫາເຣື້ອງ</u>

ສະໂມສອນ ແລະ ກິຈກັມ ພາຍຫລັງເລີກໂຮງຮຽນ

ນາງສຸຊານາເກີດມີບັນຫາ. ລາວຈຳຕ້ອງເຮັດວຽກກາງຄືນເພື່ອຊ່ວຍທາງຄອບຄົວ. ລາວມີລູກສາມຄົນ. ລູກສາວຂອງລາວຊື່ນາງມາເຣັຍ, ອາຍຸ 13 ປີ. ລູກຊາຍລາວຊື່ ໂຣເບີໂຕ, ອາຍຸ 14 ປີ ແລະ ລູກຊາຍຫລ້າ ຊື່ ຈອນ, ອາຍຸ 5 ປີ. ຕາມປົກກະຕິແລ້ວ ນາງມາເຣັຍ ຈະເປັນຜູ້ເອົານ້ອງພາຍຫລັງເລີກໂຮງຮຽນ ເພື່ອໃຫ້ແມ່ຂອງລາວອອກໄປເຮັດວຽກນອກ.

ມາບັດນີ້, ນາງມາເຣັຍ ຕ້ອງການເຂົ້າຮ່ວມວົງດົນຕຣີດຸຣິຍາງທີ່ໂຮງຮຽນ. ລາວມັກຫລິ້ນດົນຕຣີປະເພດ :ປີ່ຄູ່ຍ. ວົງດົນຕຣີຝຶກຊ້ອມການຫລິ້ນເພງພາຍຫລັງໂຮງຮຽນ ສອງຄັ້ງຕໍ່ອາທິດ. ນາງກ່າວອອກມາວ່າ, "ຂ້ອຍຈະກາຍມາເປັນຜູ້ຫລິ້ນດົນຕຣີຜູ້ດີເລີດ ຖ້າຂ້ອຍມີເວລາຝຶກຊ້ອມພາຍຫລັງເລີກໂຮງຮຽນ. ຂ້ອຍສາມາດຮຽນໄດ້ຫລາຍຂຶ້ນອີກ. ຖ້າຂ້ອຍຢາກຮຽນຕໍ່ທີ່ວິທຍາລັຍ, ຂ້ອຍຈຳຕ້ອງເຮັດກິຈກັມອື່ນໆອີກດ້ວຍ ພາຍຫລັງເລີກໂຮງຮຽນ". ນາງສຸຊານາກ່າວວ່າ "ແມ່ບອກ - ເຈົ້າຈະຕ້ອງເບິ່ງນ້ອງນ້ອຍຂອງເຈົ້າ. ວົງດົນຕຣີບໍ່ສຳຄັນເທົ່າໃດ".

1. ນາງສຸຊານາຈະອະທິບາຍບັນຫາຂອງລາວແບບໃດ?

2. ລາວຈະສາມາດຖາມ ມາເຣັຍ ແລະ ໂຣເບີໂຕ ສິ່ງໃດແດ່?

3. ແມ່ນບຸກຄົນໃດຢູ່ໃນຄອບຄົວຂອງລາວ ທີ່ລາວຈະສາມາດນຳບັນຫາເຂົ້າປຶກສາຫາລືນຳໄດ້?

4. ແມ່ນບຸກຄົນໃດໃນຄຸ້ມບ້ານຂອງລາວ ທີ່ລາວຈະສາມາດນຳບັນຫາເຂົ້າປຶກສາຫາລືນຳໄດ້?

5. ແມ່ນບຸກຄົນໃດພາຍໃນໂຮງຮຽນ ທີ່ລາວຈະສາມາດນຳບັນຫາເຂົ້າປຶກສາຫາລືນຳໄດ້?

6. ທ່ານມີຄວາມຄິດເຫັນອັນໃດບໍ່ ທີ່ຈະຊ່ວຍແກ້ບັນຫາສອງແມ່ລູກນີ້ໄດ້.

ບົດອ່ານ: ບັນຫາເລື່ອງ

ລູກຊາຍຂ້ອຍບໍ່ເຮັດວຽກທີ່ຄູກຳໜົດໃຫ້ໄປເຮັດທີ່ບ້ານ

ທ້າວປັງ ເກີດມີບັນຫາຫຍຸ້ງກັບລູກຊາຍລາວ. ລູກຊາຍລາວຊື່ ທ້າວຕິງ. ທ້າວຕິງ ອາຍຸໄດ້ 15 ປີ. ລາວໄປໂຮງຮຽນມັທຍົມ. ລາວເປັນເດັກດີ ແຕ່ລາວບໍ່ເຮັດວຽກທີ່ຄູກຳໜົດໃຫ້ໄປເຮັດທີ່ບ້ານແຕ່ຢ່າງໃດເລີຍ. ທາງຄູສອນກໍ່ເລີຍຮຽກທ້າວປັງໄປບອກໃຫ້ຊາບ ກ່ຽວກັບບັນຫານີ້. ສ່ວນທ້າວປັງ ຜູ້ເປັນພໍ່ ກໍ່ບໍ່ຮູ້ວ່າ ຄູໄດ້ກຳໜົດວຽກໃຫ້ໄປເຮັດທີ່ບ້ານທຸກໆຄືນ ເພາະລາວບໍ່ເຄີຍເຫັນທ້າວຕິງເຮັດວຽກບ້ານດັ່ງກ່າວຈັກເທື່ອ. ທ້າວປັງ ຜູ້ເປັນພໍ່ ຈະເຮັດຢ່າງໃດ?

1. ທ້າວປັງຮູ້ສຶກຢ່າງໃດ?

2. ທ້າວປັງຈະສາມາດອະທິບາຍບັນຫານີ້ ເປັນພາສາອັງກິດແບບໃດ?

3. ທ້າວປັງຈະຖາມຫຍັງແດ່ຕໍ່ລູກຊາຍຂອງລາວ?

4. ທ້າວປັງຈະຖາມຫຍັງແດ່ຕໍ່ຄູ ກ່ຽວກັບວຽກງານທີ່ຄູກຳໜົດໃຫ້ໄປເຮັດທີ່ບ້ານ?

5. ທ້າວປັງຈະນຳບັນຫານີ້ ໄປປຶກສາຫາລືຢູ່ໃນໂຮງຮຽນກັບບຸກຄົນໃດ?

6. ທ້າວປັງຈະເຮັດສິ່ງໃດຢູ່ບ້ານ ເພື່ອຊ່ວຍລູກລາວຢູ່ໂຮງຮຽນ?

Limited English Proficient (LEP)

Parent Involvement Project

ໂຄງການພົວພັນພໍ່ແມ່ນັກຮຽນທີ່ຂາດພື້ນຖານພາສາອັງກິດ

3

ກົມສຶກສາປະຈຳຣັຖມິນນີໂຊຕາ
ຜແນກປະຊາສຶກສາແລະສຶກສາຜູ້ໃຫຍ່
ນ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາອັງກິດ

Minnesota Department of Education
Community and Adult Education Section
Limited English Proficiency Education Unit

ຣະດູໃບໄມ້ປົ່ງ ໑໙໙໑ Spring, 1991

MODULE 3

PARENTS ARE TEACHERS

ບົດຮຽນ ທີ່ 3

ພໍ່ແມ່ຄືຄູສອນ

ຄຳຂອບໃຈ

ປະມວນບົດຮຽນເຫລົ່ານີ້ ເປັນຜົນງານຮ່ວມມືຂອງ ຍານາງ ໄດແອນ ປີກາເຣໂຣ ຜແນກປະຊາສຶກສາ ແລະ ສຶກສາຜູ້ໃຫຍ່ ແລະ ທ່ານ ດຣ. ບຸນລ້ອງ ພິມມະສຸວັນ ຫນ່ວຍສຶກສາກ່ຽວກັບການຂາດພື້ນຖານພາສາ ອັງກິດ.

ຍານາງ ຈຸດິດ ສະໄຕ ອະດີດຄູຣສອນພາສາອັງກິດເປັນພາສາທີສອງ ຊຶ່ງປັດຈຸບັນນີ້ທຳຫນ້າທີ່ເປັນ ຄຣູສອນຢູ່ໂຮງຮຽນມັທຍົມພາກຕົ້ນແຊນຟອດ ໃນເມືອງມິນນີອາໂປລິສ ຊ່ວຍອອກແບບແລະຂຽນປື້ມອຸປກອນ ການສອນດັ່ງກ່າວ.

ຣະດູໃບໄມ້ປົ່ງ 1990

ທ່ານ ທີ່ຮັກແພງ,

ໄດ້ມີຂບວນການຂັ້ນຊາດ ທີ່ສົ່ງເສີມໃຫ້ບັນດາພໍ່ແມ່ ມີສ່ວນກ່ຽວພົວພັນໃນການສຶກສາຂອງພວກລູກໆ. ພວກເຮົາສນັບສນູນໃນແນວຄິດດັ່ງກ່າວ ໂດຍສະເພາະແລ້ວສຳລັບຄອບຄົວ ຊຶ່ງເປັນຊາວອົພຍົບລີ້ໄພ ຫລືຊາວອົພຍົບທົ່ວໄປ ທີ່ໄດ້ເຂົ້າມາອາໄສຢູ່ສະຫະຣັດອະເມຣິກາ ໃນໄລຍະ 20 ປີ ທີ່ຜ່ານມານີ້ ແລະຂາດພື້ນຖານດ້ານພາສາອັງກິດ. ຊາວອົພຍົບດັ່ງກ່າວ ຈະຕ້ອງໄດ້ຜເຊີນໜ້າກັບບັນຫາຕ່າງໆ ໃນການທີ່ຈະຊຸກຍູ້ນຳລ້ຽງລູກ ຊຶ່ງກຳລັງຈະກາຍມາເປັນຄົນອະເມຣິກັນຢູ່ແລ້ວ ພ້ອມດຽວກັບພົວພັນເຂົ້າໃນຣະບົບການສຶກສາໃໝ່ ຊຶ່ງເຂົາເຈົ້າບໍ່ເຄີຍໄດ້ພົບພໍ້ມາແຕ່ກ່ອນເລີຍ.

ອຸປກອນທີ່ໄດ້ຈັດທຳຂຶ້ນມານີ້ ແມ່ນເພື່ອໃຊ້ໃນອົງການສຶກສາຜູ້ໃຫຍ່ ເຊັ່ນຫ້ອງຮຽນພາສາອັງກິດເປັນພາສາທີສອງ, ການຈັດຕັ້ງປະຊາຄົມ ຫລື ການຈັດຕັ້ງຂອງພໍ່ແມ່ນັກຮຽນ ຊຶ່ງລວັນແລ້ວກໍ່ມີຈຸດປະສົງຢາກໃຫ້ການຊິດຊວ່ຍພໍ່ແມ່ຫລືຜູ້ປົກຄອງເດັກ ທີ່ມີຄວາມຮູ້ຈຳກັດດ້ານພາສາອັງກິດ ໃຫ້ເຂົາເຈົ້າຮູ້ສຶກປະກອບສ່ວນເຂົ້າໃກການຮ່ຳຮຽນຂອງພວກລູກໆໂດຍຈິງຈັງ.

ພວກເຮົາທີ່ອອກແບບອຸປກອນນີ້ ມີຈຸດປະສົງຢູ່ 3 ຢ່າງ ຄື:

1. ໃຊ້ຄວາມຮູ້ຄວາມສາມາດຂອງບັນດາພໍ່ແມ່ ທີ່ໄດ້ມີປະສົບການມາແຕ່ບ້ານເກີດເມືອງນອນຂອງເຂົາເຈົ້າ.

2. ຊຸກຍູ້ຊວ່ຍເຫລືອໃຫ້ບັນດາພໍ່ແມ່ຫລິງເຫັນເຂົາເຈົ້າເອງ ເຫມືອນກັນກັບເປັນຄຣູຜູ້ສຳຄັນຜູ້ທຳອິດ. (ຄວາມນຶກຄິດອັນນີ້ ໄດ້ສູນເສັຽໄປໃນເວລາເປັນອົພຍົກ).

3. ສ້າງໂອກາດໃຫ້ບັນດາພໍ່ແມ່ໄດ້ສຶກສາປຽບທຽບສິ່ງທີ່ຄ້າຍຄືກັນ ຫລືແຕກຕ່າງກັນໃນສັງຄົມວັທນະທັມເກົ່າແລະໃຫມ່, ທັງນີ້ ກໍ່ເພື່ອສ້າງສະພານເຊື່ອມລະຫວ່າງປະສົປການສອງຢ່າງນີ້

4. ສົ່ງເສີມໃຫ້ພໍ່ແມ່ໄຈ້ແຍກວ່າ ຄຸນຄ່າປະເພນີອັນໃດດີງາມທີ່ຄວນຮັກສາໄວ້.

ການຊວ່ຍເຫລືອໃຫ້ບັນດາພໍ່ແມ່ທີ່ຫາກໍ່ມາຮອດໃໝ່ໆນີ້ ໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບຣະບົບການສຶກສາ ແລະ ເຮັດໃຫ້ເຂົາເຈົ້າສາມາດມີບົດບາດໃນຂບວນການສຶກສາ ເປັນສິ່ງທີ່ສຳຄັນມາກ. ຄຣູອາຈານແລະຜູ້ນຳການຈັດຕັ້ງຕ່າງໆ ຈະໃຊ້ອຸປກອນນີ້ ສຳລັບປັບປຸງຄວາມຮູ້ຄວາມຖນັດ ແລະ ຄວາມເຊື່ອຫມັ້ນໃຫ້ພວກພໍ່ແມ່ ເພື່ອເປັນບາດກ້າວທຳອິດ ໄປເຖິງການປະກອບສ່ວນເຕັມສ່ວນໃນການສຶກສາຂອງພວກລູກໆ.

ໂດຍຄວາມຮັກແພງ,

ໄດແອນ ປີກາເຣໂຣ　　　　　　　　　　　　ບຸນລ້ຽງ ພິມມະສູວັນ

ຄຳແນະນຳ

ການຊ່ວຍເຫລືອພວກນັກຮຽນໃຫ້ໄດ້ຮັບຄວາມສຳເຣັດໃນໂຮງຮຽນ

ພໍ່ແມ່ນັກຮຽນທີ່ຫາກໍ່ມາຮອດສະຫະຣັດອະເມຣິກາໃຫມ່ໆ ສະແດງຄວາມເປັນຫວ່ງຕໍ່ການສຶກສາຂອງລູກຫລານເຂົາເຈົ້າຢູ່ເລື້ອຍໆ ແລະບໍ່ແນ່ໃຈກ່ຽວກັບບົດບາດຂອງຕົນຕໍ່ວິທີການຮຽນຂອງພວກລູກຫຼານ. ບົດຮຽນເຫລົ່ານີ້ ແມ່ນແນໃສ່ການແກ້ໄຂບັນຫາດັ່ງກ່າວ ເປັນບົດຮຽນທີ່ຢູ່ໃນແນວຄິດທີ່ວ່າຄອບຄົວເປັນຄືໂຮງຫລອມຫລໍ່ ບົ່ມນິໄສໃຈຄໍ ທາງທັສນະຄະດີ ທາງການກະຕຸ້ນຊຸກຍູ້ກຳລັງໃຈ ທາງລະບຽບວິໄນ ແລະ ທາງການສ້າງຄຸນຄ່າຕົນເອງ. ຄຸນລັກສນະດັ່ງກ່າວນີ້ ມີອິດທິພົນອັນແຮງກ້າ ສາມາດຊີ້ຂາດວ່ານັກຮຽນຈະປະສົບຄວາມສຳເຣັດຫລືບໍ່ໃນຫ້ອງຮຽນ. ອີກຢ່າງນຶ່ງ ຄວາມສາມາດຂອງພໍ່ແມ່ ທີ່ຈະຊັກນຳສົ່ງເສີມການຮຽນຂອງລູກ ບໍ່ໄດ້ຂຶ້ນກັບຄວາມຮູ້ພື້ນຖານດ້ານພາສາອັງກິດແຕ່ຢ່າງໃດເລີຍ.

ອຸປກອນດັ່ງກ່າວນີ້ ແມ່ນແນໃສ່ການຊ່ວຍເຫລືອໃຫ້ພໍ່ແມ່ຮູ້ເຖິງພລັງຄວາມສາມາດຂອງເຂົາເຈົ້າ ທີ່ໄດ້ລ້ຽງດູລູກໆຈົນໃຫຍ່ກ້າຫນ້າບານ ແລະໃຫ້ຄວາມຫມັ້ນໃຈຕື່ມອີກວ່າ ຄວາມຊຳນິຊຳນານຂອງເຂົາເຈົ້າດັ່ງກ່າວມີຄຸນຄ່າສູງມາກ. ຫົວຂໍ້ເຣື້ອງທີ່ນຳມາສເນີນີ້ ຈະໃຊ້ເປັນຈຸດລິເລີ້ມໃນການສົນທະນາ ແລກປ່ຽນຄວາມຄິດເຫັນ ແລະໃຫ້ການຊ່ວຍເຫລືອຊຶ່ງກັນແລະກັນ ລະຫວ່າງພວກພໍ່ແມ່ນັກຮຽນ.

ບົດຮຽນໄດ້ແບ່ງອອກເປັນ 3 ພາກດັ່ງນີ້:

1. ວັທນະທັມ: ສະພານເຊື່ອມ ວັທນະທັມໃຫມ່ແລະເກົ່າ ຮຽນຮູ້ສິ່ງໃຫມ່ ແຕ່ບໍ່ລະຖິ້ມສິ່ງເກົ່າ.
2. ໂຮງຮຽນ ແມ່ນພາກສ່ວນນຶ່ງຂອງວັທນະທັມ.
3. ພໍ່ແມ່ຄືຄູສອນ.

ແຕ່ລະບົດຮຽນຈະມີບົດອ່ານສັ້ນໆ ໃຊ້ເປັນຈຸດແນະນຳເຂົ້າໄປເຖິງຈຸດສຳຄັນຂອງບົດຮຽນ ຕິດຕາມດ້ວຍບົດຝຶກຫັດ ເພື່ອສຶກສາແລະສົນທະນາກັນ. ທ້າຍສຸດ ຈະຍົກເຣື້ອງບັນຫາໃດບັນຫານຶ່ງຂຶ້ນມາ ເພື່ອໃຫ້ມີການສົນທະນາອອກຄວາມຄິດຄວາມເຫັນລະຫວ່າງພວກພໍ່ແມ່.

ວິທີດຳເນີນງານ ຈະຈັດໃຫ້ເປັນຄູ່ ເປັນຫມວດນ້ອຍໆ ຫລືຈະເປັນກຸ່ມໃຫຍ່ກໍ່ໄດ້ ສຸດແລ້ວແຕ່ເຫມາະສົມ.

ໃນຂະນະທີ່ພໍ່ແມ່ໄດ້ເພີ້ມພູນຄວາມຮູ້ຄວາມສາມາດ ແລະຄວາມເຊື່ອຫມັ້ນໃນການລ້ຽງດູລູກ ໃນສັງຄົມວັທນະທັມອັນໃຫມ່ນີ້ ຫວັງວ່າເຂົາເຈົ້າຈະຫັນມາໃຫ້ຄວາມສົນໃຈຕື່ມເປັນພິເສດ ໃນການສຶກສາຂອງພວກລູກໆບໍ່ວ່າໃນບ້ານຫລືໂຮງຮຽນກໍ່ດີ.

ຂໍ້ໃຫຍ່ໃຈຄວາມ

ຜົນຂອງການຄົ້ນຄວ້າກ່ຽວກັບບົດບາດຂອງພໍ່ແມ່ໃນການສຶກສາ ໄດ້ຊີ້ບອກດັ່ງນີ້:

- ພໍ່ແມ່ ເປັນຄຣູຜູ້ສຳຄັນຜູ້ທຳອິດ.

- ໂຮງຮຽນ ຕ້ອງການຄວາມຊ່ວຍເຫລືອຈາກພໍ່ແມ່.

- ການປາກເວົ້າພາສາອັງກິດໄດ້ຢ່າງຄ່ອງແຄ້ວນັ້ນ ບໍ່ແມ່ນສາເຫດຕົ້ນຕໍສຳຄັນທີ່ຈະຕ້ອງມີ ຈຶ່ງຈະສາມາດສ້າງບັນຍາກາດການຮຽນດີໄດ້.

- ຜົນຂອງການຮໍ່າຮຽນຈະເພີ້ມທະວີຂຶ້ນ ໃນກໍຣະນີທີ່ພໍ່ແມ່:

  1. ສົ່ງເສີມໃຫ້ມີການສ້າງຄຸນຄ່າໃນຕົນເອງ ພ້ອມທັງຄວາມພູມໃຈໃນວັທນະທັມເດີມຂອງຕົນ.

  2. ເຮັດໃຫ້ທາງໂຮງຮຽນຮູ້ວ່າ ພໍ່ແມ່ມີຄວາມສົນໃຈ ແລະໃຫ້ຄຸນຄ່າແກ່ໂຮງຮຽນ ໂດຍການໄປຢ້ຽມຢາມໂຮງຮຽນ, ສອບຖາມກ່າວເຖິງກິຈກັມຂອງໂຮງຮຽນ, ເອົາຜົນງານຂອງນັກຮຽນອອກສະແດງ ເຫລົ່ານີ້ເປັນຕົ້ນ.

  3. ເວົ້າຈຳນຳລູກ ອ່ານຂໍ້ຄວາມ ຫລື ອະທິບາຍສິ່ງຕ່າງໆໃຫ້ເຂົາເຈົ້າໄດ້ເຂົ້າໃຈດີ.

  4. ເບິ່ງຕິດຕາມບໍ່ໃຫ້ເຂົາເຈົ້າເບິ່ງໂທຣະທັດໃນເຣື້ອງບໍ່ເປັນປະໂຍດ ແລະ ບໍ່ໃຫ້ເຂົາເຈົ້າໃຊ້ເວລາເບິ່ງເຣື້ອງອື່ນໆນັ້ນຈົນເກີນຄວນ.

  5. ຈັດຫາເວລາໃຫ້ສມ່ຳສເມີ ເຊັ່ນເວລາເຮັດວຽກບ້ານທີ່ຄຣູມອບໃຫ້ ເວລາກິນອາຫານ ແລະ ເວລາຫລັບນອນ.

  6. ຈັດຫາສະຖານທີ່ເຫມາະສົມ ໃຫ້ເປັນບ່ອນຮຽນຫນັງສືຕ່າງຫາກ.

  7. ຈຳກັດເວລາໄປເຮັດການພາຍຫລັງເລີກໂຮງຮຽນ ໃຫ້ຢູ່ໃນຂອບເຂດ.

ບົດຮຽນທີ່ 3: ພໍ່ແມ່ຄືຄຣູສອນ

ທ່ານເປັນຄຣູສອນຜູ້ສຳຄັນທີ່ສຸດສຳຣັບລູກຂອງທ່ານ. ພາຍໃນອາທິດນຶ່ງ ລູກຂອງທ່ານໃຊ້ເວລາຢູ່ໂຮງຮຽນປະມານ 35 ຊົ່ວໂມງ ແຕ່ໃຊ້ເວລາຢູ່ເຮືອນຂອງຕົນຫລາຍກວ່າ 50 ຊົ່ວໂມງ. ພວກລູກໄດ້ຮຽນເອົາວິຊາຊີບອັນມີຄ່າຢູ່ເຮືອນຄົວ, ຢູ່ເດີ່ນບ້ານ, ແລະ ຢູ່ຕາມຕລາດຮ້ານຄ້າຕ່າງໆ. ທຸກສະຖານທີ່ແມ່ນເປັນບ່ອນຮຽນຮູ້ທັງໝົດ.

- ຖ້າພວກເຂົາຊ່ວຍຄົວກິນປຸງແຕ່ງອາຫານ ພວກເຂົາເຈົ້າກໍ່ຈະໄດ້ຮຽນວິທີປຸງອາຫານໃຫ້ແຊບດີ.
- ພວກເຂົາເຈົ້າເບິ່ງຊ່ວຍໃນການສອັມແປງຣົຖຖີບ ພວກເຂົາກໍ່ຈະໄດ້ຮຽນຮູ້ກ່ຽວກັບການໃຊ້ເຄື່ອງມືທີ່ຖືກຕ້ອງແລະປອດພັຍດີ.
- ຖ້າພວກເຂົາເຮັດວຽກຊ່ວຍຄອບຄົວ ພວກເຂົາກໍ່ຈະຮຽນຮູ້ຄວາມຮັບຜິດຊອບພາຍໃນຄອບຄົວ.

<u>ຄອບຄົວແມ່ນຄູສອນທຳອິດ</u>

ກ. ໃຫ້ຄິດເບິ່ງບາງຢ່າງ ຊຶ່ງທ່ານຮຽນຈາກຄອບຄົວ ເມື່ອເວລາທ່ານເປັນເດັກນ້ອຍຢູ່. ຈົ່ງຂຽນສິ່ງທີ່ຜ່ານມາດັ່ງກ່າວ ລົງໃສ່ຂ້າງລຸ່ມນີ້:

ຍົກຕົວຢ່າງ :	ປູກຕົ້ນໄມ້ໃນສວນ. ບອກຄວາມຈິງ.

1.

2.

3.

4.

5.

6.

ຄຳຖາມເພີ້ມເຕີມເພື່ອແລກປ່ຽນຄວາມຄິດເຫັນ: ພໍ່ແມ່ຂອງທ່ານສອນທ່ານແບບໃດກ່ຽວກັບສິ່ງເຫລົ່ານີ້?

ຂ. ໃຫ້ວາດພາບເບິ່ງເຫມືອນກັບວ່າ ທ່ານໄດ້ຢູ່ປະເທດຂອງພວກທ່ານເອງ ມີສິ່ງໃດແດ່ທີ່ທ່ານຈະຕຽ້ງສອນໃຫ້ລູກຂອງທ່ານ?

ຍົກຕົວຢ່າງ :	ຕຶກປາ ນັບຖືຕໍ່ຄອບຄົວ

1.

2.

3.

4.

5.

6.

ຄຳຖາມເພີ້ມເຕີມເພື່ອແລກປ່ຽນຄວາມຄິດຄວາມເຫັນ: ທ່ານຈະສອນແບບໃດກ່ຽວກັບສິ່ງເຫລົ່ານັ້ນ?

ຄ. ໃຫ້ທວນຄິດຫາບາງສິ່ງບາງຢ່າງ ຊຶ່ງທ່ານໄດ້ສິດສອນໃຫ້ລູກທ່ານທີ່ຜ່ານມາ. ຈົ່ງຂຽນເອົາສິ່ງເຫລົ່ານັ້ນລົງໄວ້ຂ້າງລຸ່ມນີ້:

ຍົກຕົວຢ່າງ :	ບອກຄວາມຈິງ. ຫລິ້ນເກມ.

1.

2.

3.

4.

5.

6.

ຄຳຖາມເພີ້ມເຕີມເພື່ອແລກປ່ຽນຄວາມຄິດເຫັນ: ທ່ານສອນສິ່ງເຫລົ່ານີ້ແບບໃດ?

ງ. ໃຫ້ຄິດເບິ່ງວ່າ ມີສິ່ງໃດແດ່ທີ່ທ່ານຢາກສອນໃຫ້ລູກທ່ານໃນອານາຄົດ. ຈົ່ງຂຽນຂໍ້ຄວາມດັ່ງກ່າວລົງໄວ້ຂ້າງລຸ່ມນີ້.

> ຍົກຕົວຢ່າງ : ຂີ່ຣົຖຖີບ.
> ຮຽນຂຽນເປັນພາສາຕົນເອງ.

1.

2.

3.

4.

5.

6.

ຄຳຖາມເພີ້ມເຕີມເພື່ອແລກປ່ຽນຄວາມຄິດເຫັນ: ທ່ານຈະສອນສິ່ງເຫລົ່ານີ້ແບບໃດ?

ຊ່ວຍເດັກໃຫ້ໄດ້ຮັບຜົນສຳເລັດ

ວິທີປະຕິບັດ:

ອ່ານແລ້ວຕອບວ່າ ຖືກ ຫລື ຜິດ. ຫລັງຈາກນັ້ນ ໃຫ້ທ່ານຄິດກ່ຽວກັບຄວາມຮູ້ສຶກຂອງທ່ານ ແລະສົນທະນາແລກປ່ຽນຄວາມຄິດຄວາມເຫັນ ກ່ຽວກັບຄຳຕອບຂອງທ່ານກັບໝູ່ເພື່ອນຄົນອື່ນໃນຫ້ອງຮຽນ.

______ 1. ຖ້າເຮົາປາກພາສາອັງກິດບໍ່ໄດ້ດີ, ເຮົາຈະບໍ່ສາມາດຊ່ວຍລູກເຮົາໃຫ້ໄດ້ຮັບຜົນສຳເລັດດີໃນໂຮງຮຽນ.

______ 2. ຢູ່ໃນໂຮງຮຽນ ບັນດາຄູສອນຕ້ອງການຢາກຮູ້ແນວຄິດ ແລະ ຄວາມເຫັນຂອງພວກນັກຮຽນ

______ 3. ມີແຕ່ຢູ່ໃນໂຮງຮຽນເທົ່ານັ້ນ ທີ່ນັກຮຽນພາກັນຮຽນທຸກສິ່ງທຸກຢ່າງ ຊຶ່ງຕ້ອງການຮຽນຮູ້.

______ 4. ເຮົາສາມາດສອນລູກເຮົາ ກ່ຽວກັບສິ່ງສຳຄັນສິ່ງໃດສິ່ງນຶ່ງພາຍໃນ 10-15 ນາທີ.

______ 5. ເດັກບໍ່ຄວນນຳເອົາວັທນະທັມຂອງພວກຕົນ ມາກ່າວຢູ່ທີ່ໂຮງຮຽນ.

______ 6. ເລົ່ານິທານໃຫ້ລູກຟັງດ້ວຍພາສາຂອງຕົນ ຈະຊ່ວຍລູກຕົນອ່ານປາກພາສາອັງກິດໄດ້.

______ 7. ເບິ່ງໂທຣະທັດແລະວີດີໂອຫລາຍໆ ຈະຊ່ວຍລູກຕົນຮຽນພາສາອັງກິດໄດ້.

______ 8. ເດັກຈະສາມາດໄດ້ຮັບຜົນສຳເລັດຢູ່ໃນໂຮງຮຽນດີຂຶ້ນ ຖ້າພວກເຂົາປະລະຖິ້ມພາສາ ແລະ ວັທນະທັມດັ້ງເດີມຂອງພວກເຂົາ.

______ 9. ຖ້າເດັກຢາກຢູ່ເດິກໃນວັນທັມມະດາ, ທ່ານກໍ່ອະນຸຍາດໃຫ້ຢູ່ເດິກໄດ້.

______ 10. ຖ້າທ່ານຮວມຫລິ້ນເກມກັບລູກທ່ານ, ໄປຕຶກປາ, ປູກຕົ້ນໄມ້ຢູ່ສວນ. ພວກເຂົາຈະໄດ້ຮັບຄວາມສຳເລັດຢູ່ໃນໂຮງຮຽນດີຂຶ້ນ.

______ 11. ມັນເປັນແນວຄິດອັນດີທີ່ຕ້ອງເຮັດການບ້ານ ທີ່ທາງໂຮງຮຽນມອບໝາຍໃຫ້ໃນເວລາດຽວກັນທຸກໆວັນ.

______ 12. ມັນເປັນການດີສຳຣັບພວກນັກຮຽນຊັ້ນມັທຍົມ ມີວຽກເຮັດງານທຳ ພາຍຫລັງເລີກຈາກໂຮງຮຽນ.

______ 13. ມັນເປັນການດີສຳຣັບລູກທ່ານ ຖ້າມີປຶ້ມອ່ານຫລືໜັງສືພິມຂຽນເປັນພາສາດັ່ງເດີມຂອງຕົນຢູ່ໃນເຮືອນ.

______ 14. ຖ້າຫາກທ່ານພາລູກທ່ານໄປຫລິ້ນສວນສັດ, ໄປຫ້ອງສມຸດ, ໄປຊົມການກິລາ. ພວກເຂົາເຈົ້າຈະໄດ້ຮັບຄວາມສຳເລັດດີຂຶ້ນ.

______ 15. ພວກເດັກຕ້ອງການໃຫ້ມີຫ້ອງສ່ວນຕົວ; ທັງນີ້ ເພື່ອໃຫ້ເຂົາເຈົ້າມີບ່ອນເຮັດວຽກທີ່ທາງໂຮງຮຽນມອບໝາຍໃຫ້.

ຊ່ວຍເດັກໃຫ້ປະສົບຜົນສຳເຣັດ

	ຄຳຕອບ	ການອະທິບາຍ
1.	ຜິດ	ເຮົາສາມາດເຮັດຫລາຍສິ່ງຫລາຍຢ່າງໄດ້ ເພື່ອຊ່ວຍລູກເຮົາ ເຖິງແມ່ນວ່າເຮົາປາກພາສາອັງກິດບໍ່ໄດ້ກໍ່ຕາມ. ເລົ່ານິທານແລະອ່ານປຶ້ມເປັນພາສາດັ້ງເດີມຂອງຕົນເປັນສິ່ງສຳຄັນ. ມັນເປັນການດີທີ່ນຳເອົາຂ່າວພາຍໃນ ແລະ ຕ່າງປະເທດມາໂລມກັນ. ພາເດັກໄປຊົມສວນສັດ, ໄປຫ້ອງສມຸດ, ສິ່ງເຫລົ່ານີ້ເປັນກິຈກັມຮຽນຮູ້ທັງນັ້ນ.
2.	ຖືກ	ນັກຮຽນຕ້ອງການຮຽນຮູ້ຄວາມຈິງ. ພວກເຂົາຕ້ອງການອອກຄວາມຄິດຄວາມເຫັນ ແລະໃຫ້ເຫດຜົນຈາກຄວາມຮູ້ສຶກຂອງພວກເຂົາ.
3.	ຜິດ	ພໍ່ແມ່ຄືຄູສອນນ້ຳເບີ 1. ພວກເດັກນ້ອຍມີໂອກາດຢູ່ໂຮງຮຽນພຽງແຕ່ 30 ຫາ 35 ຊົ່ວໂມງເທົ່ານັ້ນພາຍໃນອາທິດນຶ່ງ. ນອກຈາກນັ້ນ ແມ່ນພວກເຂົາໃຊ້ເວລາສຶກສາຮຽນຮູ້ຈາກຄອບຄົວ.
4.	ຖືກ	ພາຍໃນຫ້າຫລືສິບນາທີ ເດັກຂອງທ່ານສາມາດເຝິກແອບສິ່ງເປັນປະໂຍດຫລາຍຢ່າງ. ເດັກນ້ອຍສາມາດກ່າວທັບທວນຊື່, ທີ່ຢູ່, ວັນເກີດ, ແລະ ຫມາຍເລຂໂທຣະສັບຂອງເຂົາເຈົ້າໄດ້. ພວກເຂົາເຈົ້າສາມາດຫລິ້ນເກມຄຳນວນເລຂ ໂດຍນັບ ຂຶ້ນເທື່ອລະ 2, 3, 4, ຯລຯ. ທ່ານສາມາດຟັງການສະກົດອອກສຽງຄຳສັບ. ຮຽນຄັ້ງລະເລັກລະນ້ອຍ ໃນຂັ້ນຕໍ່ໄປກໍ່ຮຽນໄດ້ເປັນຫລາຍໆຊົ່ວໂມງ.
5.	ຜິດ	ຄູຕ້ອງການຮຽນຮູ້ວັທນະທັມຂອງນັກຮຽນ. ເຂົາເຈົ້າຕ້ອງການໃຫ້ນັກຮຽນຄົນອື່ນສຶກສາຮຽນວັທນະທັມຂອງເຂົາເຈົ້າເຫມືອນກັນ.
6.	ຖືກ	ຖ້າເຮົາຮູ້ເຣື້ອງນິທານໃນພາສານຶ່ງ, ເຮົາຈະຮູ້ນິທານໃນພາສາທີ່ສອງງ່າຍຂຶ້ນ. ພວກນັກຮຽນຮູ້ດີຢູ່ແລ້ວ ວ່າທຸກເຣື້ອງຈະມີບັນຫາ ແລະ ມີຕົວເດັ່ນທີ່ຈະແກ້ໄຂບັນຫານັ້ນໆ. ໃນເມື່ອເຂົາເຈົ້າໄດ້ເນື້ອຄວາມເປັນພາສາເຂົາແລ້ວ ມັນຈະຊ່ວຍເຂົາໃຫ້ເຂົ້າໃຈເນື້ອຄວາມດັ່ງກ່າວເປັນພາສາອັງກິດງ່າຍຂຶ້ນ.
7.	ຜິດ	ລາຍການໂທຣະທັດບາງຢ່າງກໍເປັນຫນ້າເບິ່ງຫນ້າຊົມດີ. ຖ້າເບິ່ງໂທຣະທັດວັນນຶ່ງເກີນສອງຊົ່ວໂມງແລ້ວ ຈະບໍ່ຊ່ວຍຫຍັງໄດ້. ພໍ່ແມ່ຄວນຊ່ວຍພວກລູກຫລານຄັດເລືອກເອົາລາຍການໂທຣະທັດດີໆ. ບາງຄັ້ງກໍ່ຮ່ວມເບິ່ງລາຍການໂທຣະທັດນຳກັນ. ທ່ານອາດຈະນຳເອົາສິ່ງດີ ແລະ ສິ່ງທີ່ບໍ່ດີມາໂລມກັນ ພາຍຫລັງໄດ້ເບິ່ງລາຍການແລ້ວ.

ຊ່ວຍເດັກໃຫ້ປະສົບຜົນສຳເລັດ (ຕໍ່)

ຄຳຕອບ	ການອະທິບາຍ
8. ຜິດ	ເດັກຈະຮຽນໄດ້ດີ ຖ້າພວກເຂົາຮູ້ສຶກພໍໃຈໃນຕົນເອງ ໃນຄອບຄົວ ແລະໃນວັທນະທັມເດີມ. ພວກເຂົາຈະບໍ່ລະອາຍໃຈ ແລະ ກ້າອອກຄວາມຄິດເຫັນຢູ່ໃນຫ້ອງຮຽນ. ພວກເຂົາຈະບໍ່ມີຄວາມຢ້ານໃນການທີ່ຈະເຮັດສິ່ງໃດສິ່ງນຶ່ງທີ່ແປກໃຫມ່.
9. ຜິດ	ເດັກຈະຮຽນໄດ້ດີ ຖ້າພວກເຂົານອນເຕັມເວລາ. ເຫັນວ່າເປັນແນວຄິດທີ່ດີ ທີ່ໃຫ້ເດັກເຂົ້ານອນໃນເວລາດຽວກັນເປັນປະຈຳທຸກຄືນ.
10. ຖືກ	ການຫລິ້ນເກມຮ່ວມກັນເປັນການດີ. ເດັກຈະຮຽນຮູ້ເຖິງກົດລະບຽບ ຂອງການຫລິ້ນ. ການຫລິ້ນເກມແບບຫມາກລຸກ ຫລືຫລິ້ນໄພ້ ເປັນວິທີສອນໃຫ້ເຂົາເຈົ້າຄິດລ່ວງຫນ້າ ເພື່ອເອົາຊະນະຄູ່ຕໍ່ສູ້.
11. ຖືກ	ພໍ່ແມ່ບາງຄົນມັກໃຫ້ລູກຕົນເຮັດວຽກທີ່ທາງໂຮງຮຽນມອບໃຫ້ເສັດເສັຽກ່ອນ ຈຶ່ງເບິ່ງລາຍການໂທຣະທັດຫລືຫລິ້ນເກມ.
12. ຖືກ	ແຕ່ຢ່າໃຫ້ພວກເຂົາເຮັດວຽກນອກຫລາຍຊົ່ວໂມງເກີນໄປ. ຖ້າຫາກພວກເຂົາເຮັດວຽກຫລາຍໂພດ ພວກນັກຮຽນຈະເຮັດວຽກບ້ານຍາກຂຶ້ນ ແລະ ເວລານອນພັກຜ່ອນເຂົາກໍ່ຈະບໍ່ພຽງພໍ.
13. ຖືກ	ຖ້າເດັກເຫັນຄອບຄົວຂອງເຂົາອ່ານຫນັງສື ພວກເຂົາກໍ່ຕ້ອງການອ່ານເຫມືອນກັນ. ພວກເຂົາຈະໄດ້ຮຽນຮູ້ວ່າ ປຶ້ມອ່ານ ມີແນວຄິດອັນສຳຄັນ ແລະ ເຮັດໃຫ້ເຂົາເຈົ້າເບີກບານໄດ້.
14. ຖືກ	ຖ້າເດັກໄປທ່ຽວສະຖານທີ່ຕ່າງໆ ຢູ່ຕາມບໍຣິເວນຕົວເມືອງແລະຣັຖ, ພວກເຂົາຈະພົບເຫັນຫລາຍຢ່າງ. ພວກເຂົາຈະມີໂອກາດຮຽນຮູ້ສິ່ງເຫລົ່ານີ້ຢູ່ໂຮງຮຽນເຫມືອນກັນ. ເມື່ອເດັກຮູ້ພົບເຫັນສິ່ງຕ່າງໆຜ່ານມາແລ້ວ ເມື່ອຢູ່ຫ້ອງຮຽນເຂົາເຈົ້າພົບເຫັນສິ່ງເຫລົ່ານັ້ນ ພວກເຂົາຈະເຂົ້າໃຈງ່າຍຂຶ້ນ.
15. ຜິດ	ພວກເຂົາບໍ່ຕ້ອງການໃຫ້ມີຫ້ອງສ່ວນຕົວ ແຕ່ພວກເຂົາຕ້ອງການໃຫ້ມີບ່ອນມ້ຽນຮັກສາວຽກທາງໂຮງຮຽນມອບໃຫ້ ແລະ ມ້ຽນປຶ້ມເຈັ້ຽສີຕ່າງໆ. ພວກເຂົາຕ້ອງການສະຖານທີ່ບ່ອນຊຶ່ງໃຊ້ເຮັດວຽກທີ່ທາງໂຮງຮຽນມອບໃຫ້ແຕ່ລະວັນ.

<u>ພໍ່ແມ່ສາມາດຊ່ວຍລູກໄດ້ຢ່າງໃດ</u>

<u>ວິທີປະຕິບັດ</u>:

ໃຫ້ອ່ານເບິ່ງຂໍ້ຄວາມຢູ່ຂ້າງລຸ່ມນີ້. ໃຫ້ໝາຍຕີນກາ "x" ໃນສິ່ງຕ່າງໆທີ່ທ່ານທຳຢູ່ໃນປັດຈຸບັນນີ້. ຈົ່ງໝາຍຮູບດາວ "*" ໃສ່ໃນສິ່ງທີ່ທ່ານຈະຕັ້ງທຳໃນອານາຄົດ. ໃຫ້ຄັດເລືອກເອົາສິ່ງນຶ່ງ ຊຶ່ງທ່ານຈະພະຍາຍາມທຳໃນອາທິດຈະມາເຖິງນີ້. ໃຫ້ຂຽນວິງມິນອອັມເຣື່ອງນັ້ນ. ໃຫ້ບອກຄນະໃນກຸ່ມຂອງທ່ານ ເຖິງສິ່ງທີ່ທ່ານວາງແຜນຈະທຳ.

ສົ່ງລູກໄປໂຮງຮຽນເພື່ອຕຽມຮຽນໜັງສື

_______ ເບິ່ງໃຫ້ເຂົາເຈົ້າມີເວລາພັກຜ່ອນນອນຫລາຍໆ.
_______ ເບິ່ງໃຫ້ເຂົາເຈົ້າໄດ້ກິນເຂົ້າເຊົ້າຈົບດີ.
_______ ໃຫ້ມີບ່ອນສງົບ ເພື່ອຮ່ຳຮຽນ ແລະ ໃຫ້ເປັນບ່ອນເກັບມ້ຽນເຈັ້ຽສື.
_______ ຈັດໃຫ້ມີບ່ອນວາງຖົງໃສ່ປື້ມ ແລະອື່ນໆ ເພື່ອຕຽມພ້ອມໄປໂຮງຮຽນໃນມື້ຂອງວັນໃໝ່.
_______ ຫ້າມເຂົາເຈົ້າເບິ່ງລາຍການໂທຣະທັດຫລາຍຈົນເກີນໄປ.
_______ ຊ່ວຍຈັດຫາເຄື່ອງນຸ່ງຫົ່ມໃຫ້ພວກລູກຜູ້ນ້ອຍ ວ່າຄວນນຸ່ງເຄື່ອງຊຸດໃດໄປໂຮງຮຽນໃນຕອນເຊົ້າ.

ໃຫ້ການສນັບສນູນໂຮງຮຽນ ແລະ ສະແດງອອກສິ່ງທີ່ທ່ານຄິດວ່າມີຄວາມສຳຄັນ

_______ ມ້ຽນຮັກສາເຈັ້ຽສື່ຂອງລູກ ຊຶ່ງໄດ້ຈາກໂຮງຮຽນ.
_______ ເວົ້າເຖິງໂຮງຮຽນ. ສອບຖາມເບິ່ງສິ່ງດີສິ່ງທີ່ບໍ່ດີເກີດຂຶ້ນຢູ່ໂຮງຮຽນ.
_______ ໄປຫ້ອງສມຸດພ້ອມກັບພວກນັກຮຽນເປັນປົກຕິ.
_______ ໄປເບິ່ງໂຄງການແລະພົບພໍ້ຄູສອນທີ່ໂຮງຮຽນ.
_______ ໃຫ້ເດັກອ່ານໃຫ້ຟັງ ເຖິງແມ່ນທ່ານບໍ່ເຂົ້າໃຈກໍ່ຕາມ.
_______ ໃຫ້ເບິ່ງບັດລາຍງານຄວາມກ້າວໜ້ານັກຮຽນ. ໂທໄປຫາໂຮງຮຽນ ຖ້າທ່ານມີຄຳຖາມ. ຕາມປົກຕິແລ້ວ, ທາງໂຮງຮຽນມີຜູ້ຊ່ວຍແປພາສາໃຫ້ໄດ້.

BEST COPY AVAILABLE

_______ ໃຊ້ເວລາກຳກັບເບິ່ງວຽກບ້ານທີ່ທາງໂຮງຮຽນມອບໃຫ້ເຮັດ. ເດັກຈະຕ້ອງຂຽນເປັນລາຍການໃສ່ປຶ້ມນ້ອຍໄວ້ກ່ຽວກັບວຽກບ້ານຕ່າງໆ ເພື່ອໃຫ້ຜູ້ປົກຄອງໄດ້ເບິ່ງນຳ.

ກິຈກັມຮຽນຢູ່ບ້ານ

_______ ໃຊ້ເວລາໂອ້ລົມກັບເດັກ. ເດັກບາງຄົນມັກປາກເວົ້າໃນເມື່ອຂີ່ຣົດໄປຕາມທາງ. ໃນຍາມລ້າງຖ້ວຍຊາມ ກໍເປັນເວລາໂອ້ລົມໄດ້ເໝືອນກັນ.

_______ ໃຫ້ໂອ້ລົມສິ່ງທີ່ເຂົາເຈົ້າໄດ້ຍິນ, ໄດ້ເຫັນ, ໄດ້ຊີມຣົດ ແລະ ໄດ້ດົມກິ່ນ.

_______ ເມື່ອເລົ່ານິທານ ຫລື ເບິ່ງລາຍການໂທຣະທັດ ຕ້ອງນຳເອົາຄຳຖາມຂຶ້ນມາດັ່ງນີ້: ຜູ້ໃດ, ແມ່ນຫຍັງ, ຢູ່ໃສ, ເມື່ອໃດ, ແລະ ດ້ວຍເຫດໃດ ກ່ຽວກັບເຣື້ອງ ແລະ ເຫດການນັ້ນໆ.

<u>ກິຈກັມຕ່າງໆທີ່ຄວນພະຍາຍາມເຮັດເວລາຢູ່ບ້ານ</u>

ກິຈກັມຂ້າງລຸ່ມນີ້ ທ່ານອາດຈະນຳເອົາໄປປະຕິບັດເພີ້ມເຕີມຢູ່ບ້ານກໍ່ໄດ້.

ການອ່ານ

ນອກຈາກຈະອ່ານປຶ້ມແລ້ວ ສິ່ງອື່ນທີ່ຕ້ອງການອ່ານກໍ່ມີຄື: ອ່ານປ້າຍຢູ່ຕາມຖນົນ, ກັບທີ່ອາຫານ, ປະຕິທິນ, ລາຍການອາຫານຈາກໂຮງຮຽນ, ຊື່ຂອງທ່ານໃນປຶ້ມໂທຣະສັບ, ຈົດໝາຍຈາກປະເທດຂອງທ່ານເປັນຕົ້ນ.

ໂທຣະສັບ

ໂທໄປຮ້ານຂາຍເຄື່ອງເພື່ອຢາກຮູ້ຣາຄາສິ່ງຂອງບາງຢ່າງ.
ໂທໄປຖາມກ່ຽວກັບການຂີ່ຣົຖເມປະຈຳທາງ.
ໂທໄປຖາມເບິ່ງວ່າມີວຽກທາງໂຮງຮຽນມອບໃຫ້ມາເຮັດທີ່ບ້ານຫລືບໍ່.

ສະຖານທີ່ໄປທ່ຽວຢາມ

ໃຫ້ໄປຢ້ຽມຢາມສະຖານທີ່ຕ່າງໆໃກ້ທີ່ຢູ່ຂອງຕົນ ເຊັ່ນການໄປເບິ່ງສະຖານີດັບເພີງ, ສນາມບິນ, ບ່ອນປູກຕົ້ນໄມ້, ໂຮງໝໍ, ສະຖານທີ່ທັມມະຊາຕ, ສະຖານີໂທຣະທັດ, ຟາມ, ຮ້ານຂາຍສັດລ້ຽງ, ແລະ ຕໍ່ໄປ.

BEST COPY AVAILABLE

ການຂີດຂຽນ

ຂຽນຂໍ້ຄວາມທີ່ຄົນສົ່ງຄວາມໄວ້ທາງໂທຣະສັບ. ຂຽນບັນຊີລາຍການໄປຊື້ເຄື່ອງຕາມຕລາດ ແລະບັນຊີລາຍການວຽກງານທີ່ຕົນຈະເຮັດ. ຂຽນໜັງສືນ້ອຍຫາເພື່ອນ ແລະ ຄົນໃນຄອບຄົວ. ຊຸກເຊື່ອງບັນທຶກຂຽນຂໍ້ຄວາມນ້ອຍໆໃສ່ກະເປົາຜູ້ໃດຜູ້ນຶ່ງ ເພື່ອເປັນການຢອກຕລົກ.

ການປາກເວົ້າ

ເລີ້ມເລົ່ານິທານ ແຕ່ໃຫ້ຢຸດເມື່ອຮອດພາກສ່ວນຕື່ນເຕັ້ນ. ໃຫ້ເດັກຄິດຄົ້ນເອົາບັ້ນທ້າຍຂອງນິທານ ແລ້ວເລົ່ານິທານຈິນຈີບ. ຮ້ອງເພງຮ່ວມກັນ. ອ່ານຄຳກອນ. ເລົ່ານິທານອັດເຂົ້າໃນເທັບບັນທຶກສຽງໄວ້ ແລະ ຟັງຮ່ວມກັນ.

BEST COPY AVAILABLE